

UNDP

*Empowered lives.*
*Resilient nations.*

# ອົງການ ສະຫະປະຊາຊາດ ເພື່ອການ ພັດທະນາ ຢູ່ ສປປ ລາວ

2012 - 2015

# ອົງການ
# ສະຫະປະຊາຊາດ
# ເພື່ອການພັດທະນາ
# ຢູ່ ສປປ ລາວ
# 2012-2015

# ເປົ້າໝາຍ ຂອງເຮົາ

ປະຊາຊົນ ແມ່ນຄວາມຮັ່ງມີທີ່ແທ້ຈິງຂອງປະເທດ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ມີໜ້າທີ່ຊ່ວຍສ້າງຊີວິດທີ່ດີກວ່າ ແລະ ເພື່ອຮັບປະກັນວ່າປະຊາຊົນລາວທົ່ວປະເທດໄດ້ຮັບຜົນປະໂຫຍດ ຈາກການພັດທະນາປະເທດ. ພວກເຮົາສະໜັບສະໜູນການເຕີບໂຕທີ່ສ້າງໂອກາດທາງເສດຖະກິດ ແລະ ສັງຄົມເພີ່ມຂຶ້ນ ແລະ ດີຂຶ້ນກວ່າເດີມ ໂດຍບໍ່ສ້າງຄວາມເສຍຫາຍແກ່ສິ່ງແວດລ້ອມ. ພວກເຮົາຍັງສົ່ງເສີມສັນຕິພາບ, ສິດທິມະນຸດ ແລະ ຄວາມປອດໄພ ເຊິ່ງເປັນອົງປະກອບທີ່ສຳຄັນຂອງການພັດທະນາ, ຢູ່ ສປປ ລາວ ແລະ ອີກ 176 ປະເທດ ແລະ ອານາເຂດຕ່າງໆໃນທົ່ວໂລກ. ໂດຍລວມແລ້ວ, ພວກເຮົາໃຫ້ທັດສະນະທັງຈາກມຸມມອງສາກົນ ແລະ ທ້ອງຖິ່ນ.



# ຕັ້ງໜ້າເຮັດວຽກເພື່ອສ້າງ ຄວາມສະເໝີພາບ

ຄວາມສະເໝີພາບ ເປັນໃຈກາງຂອງການພັດທະນາ. ຫຼັກການນີ້ມາຈາກແນວຄວາມຄິດຂອງຄວາມເທົ່າທຽມກັນທາງສິລະທຳ: ທີ່ວ່າທຸກໆຄົນຄວນໄດ້ຮັບການປະຕິບັດຢ່າງເທົ່າທຽມກັນ. UNDP ຍຶດເອົາແນວຄວາມຄິດກ່ຽວກັບຄວາມເທົ່າທຽມກັນນີ້ເປັນເປົ້າໝາຍສຳຄັນຂອງການວາງແຜນງານ ເພື່ອຊ່ວຍໃຫ້ ພວກເຮົາປະຕິບັດໜ້າທີ່ ໃນການ ຮັບປະກັນວ່າທຸກຄົນໄດ້ຮັບການປະຕິບັດຢ່າງຍຸດຕິທຳ. ປະຊາຊົນທຸກຄົນຄວນໄດ້ຮັບ ໂອກາດໃນຊີວິດທີ່ເທົ່າທຽມກັນ; ໄດ້ຮັບສິນຄ້າ ແລະ ເຂົ້າເຖິງການບໍລິການຕ່າງໆຢ່າງທົ່ວເຖິງ ແລະ ຖືກຕ້ອງຕາມຄວາມຕ້ອງການຂອງພວກເຂົາ; ໄດ້ຮັບຜົນປະໂຫຍດຈາກການແຂ່ງຂັນທີ່ຍຸດຕິທຳເພື່ອທີ່ຈະໄດ້ຮັບບົດບາດ ແລະ ການຍອມຮັບໃນສັງຄົມອີງຕາມຄວາມພະຍາຍາມ ແລະ ລະດັບຄວາມສາມາດ.

ແຕ່ໃນຫຼາຍໆປະເທດທີ່ກຳລັງພັດທະນາຍັງມີຄວາມບໍ່ສະເໝີພາບ ແລະ ຄວາມບໍ່ເທົ່າທຽມກັນລະຫວ່າງກຸ່ມຄົນໃນສັງຄົມ, ລະຫວ່າງຍິງຊາຍ ແລະ ຂົງເຂດພາກພື້ນ ເຊິ່ງສ່ວນໃຫຍ່ແມ່ນເນື່ອງມາຈາກຄວາມທຸກຍາກທີ່ຍືດເຍື້ອຍາວນານ. ຈາກບັນດາເຫດການຕ່າງໆ ໄດ້ຢັ້ງຢືນໃຫ້ເຫັນເຖິງສະພາບຂອງຊີວິດທີ່ຍັງຂຶ້ນກັບສະພາບເດີມ ແລະ ຍັງມີຄວາມ ບໍ່ເທົ່າທຽມກັນໃນການເຂົ້າເຖິງການບໍລິການ, ລວມທັງການມີລາຍຮັບທີ່ບໍ່ສະເໝີພາບກັນ ເຊິ່ງອາດຈະຍິ່ງເຮັດໃຫ້ ຄວາມດ້ອຍໂອກາດໃນສັງຄົມເພີ່ມຂຶ້ນ. ນອກຈາກນັ້ນ, ຄວາມບໍ່ເທົ່າທຽມກັນກໍ່ຍັງເປັນສິ່ງທີ່ຮ້າຍແຮງໃນຕົວມັນເອງ ແລະ ສົ່ງຜົນກະທົບດ້ານລົບຕໍ່ການເຕີບໂຕຂອງເສດຖະກິດ, ການຫລຸດຜ່ອນຄວາມທຸກຍາກ, ຄວາມປອງດອງ ແລະ ການມີສິດມີສຽງໃນສັງຄົມ.

ການນຳໃຊ້ແນວຄວາມຄິດກ່ຽວກັບຄວາມເທົ່າທຽມກັນ ໃນສະພາບເງື່ອນໄຂຂອງປະເທດໃດໜຶ່ງສະເພາະນັ້ນສ່ວນ ໃຫຍ່ຍັງບໍ່ແມ່ນເລື່ອງງ່າຍ. ວິທີການແກ້ໄຂບັນຫາດັ່ງກ່າວນີ້ ແມ່ນສາມາດເຮັດໄດ້ໂດຍການເລັ່ງໃສ່ກຸ່ມຄົນທີ່ດ້ອຍໂອກາດໃນສັງຄົມ;

ຂະຫຍາຍຂອບເຂດການຄຸ້ມຄອງສັງຄົມໃຫ້ກວ້າງອອກ; ສ້າງອົງການຈັດຕັ້ງທາງສັງຄົມ ແລະ ສື່ມວນຊົນທີ່ມີຄວາມເຂັ້ມແຂງ; ແລະ ເປີດກ້ວາງການປະກອບຄຳຄິດເຫັນດ້ານການເມືອງ ແລະ ຕໍ່ນະໂຍບາຍ ຂອງລັດເພື່ອຊຸກຍູ້ໃຫ້ມີການປຶກສາຫາລືຢ່າງຈິງຈັງຕໍ່ການຈັດສັນຜົນປະໂຫຍດ ແລະ ພາລະໃນສັງຄົມຢ່າງຍຸດຕິທຳ.



# ສິ່ງທີ່ພວກເຮົາເຮັດ

UNDP ປະສານເຫື່ອແຮງທັງຈາກສາກົນ ແລະ ທ້ອງຖິ່ນ ເພື່ອບັນລຸ 8 ເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs), ເຊິ່ງມີເປົ້າໝາຍລວມ ເພື່ອຫລຸດຜ່ອນຈຳນວນປະຊາກອນທີ່ທຸກຍາກໃນໂລກ ໃຫ້ໄດ້ເຄິ່ງໜຶ່ງ ພາຍໃນປີ 2015. ສ່ວນເປົ້າໝາຍ MDG ທີເກົ້າ ແມ່ນສ້າງຂຶ້ນສະເພາະໃນ ສປປ ລາວ ຊຶ່ງເນັ້ນໜັກຫລຸດຜ່ອນຜົນກະທົບຈາກລະເບີດທີ່ຍັງບໍ່ແຕກ (UXO) ເຊິ່ງຍັງຫລົງເຫລືອຈາກສົງຄາມອິນໂດຈີນຄັ້ງທີສອງ. ເວົ້າລວມແລ້ວ, ພວກເຮົາຊ່ວຍເຫລືອ ສປປ ລາວ ໃຫ້ສາມາດສຳເລັດສອງໄລຍະຂ້າມຜ່ານທີ່ສຳຄັນຄື: (1) ເພື່ອກ້າວເຂົ້າສູ່ເສດຖະກິດແບບມີການແຂ່ງຂັນທີ່ໃຫ້ປະຊາຊົນມີທາງເລືອກ ຫຼາຍຂຶ້ນ ແລະ (2) ເພື່ອໃຫ້ກາຍເປັນປະເທດທີ່ມີລາຍຮັບປານກາງພາຍໃນປີ 2020. ສະນັ້ນ, ຂົງເຂດວຽກງານຂອງພວກເຮົາແມ່ນເນັ້ນໜັກໃສ່:

- ການຕໍ່ສູ້ກັບຄວາມທຸກຍາກ

- ການສົ່ງເສີມການປົກຄອງທີ່ມີປະສິດທິຜົນ

- ການສົ່ງເສີມການປັບປຸງການຄຸ້ມຄອງສິ່ງແວດລ້ອມ ແລະ ຫລຸດຜ່ອນຜົນກະທົບດ້ານລົບຈາກການປ່ຽນແປງຂອງດິນຟ້າອາກາດ

- ການຫລຸດຜ່ອນຄວາມສ່ຽງ ຈາກໄພພິບັດທຳມະຊາດ ແລະ ການຊ່ວຍເຫລືອການຟື້ນຟູ, ໂດຍສະເພາະແມ່ນຈາກຜົນກະທົບຈາກລະເບີດທີ່ຍັງບໍ່ແຕກ

ຄວາມພະຍາຍາມໃນການຈັດຕັ້ງປະຕິບັດແຜນງານທີ່ມີຜົນໄດ້ຮັບສູງ ແລະ ມີປະສິດທິພາບຂອງພວກເຮົາ ທີ່ ຍັງຊ່ວຍເອື້ອອຳນວຍແກ່ແມ່ຍິງ ໃຫ້ມີສິດ ແລະ ທາງເລືອກເພີ່ມຂຶ້ນ ພ້ອມຍັງ ເສີມສ້າງທັກສະຂອງປະຊາຊົນລາວ ເພື່ອບັນລຸຜົນໄດ້ຮັບຈາກການພັດທະນາ.

ພວກເຮົາຍັງໄດ້ຮັບຄວາມໄວ້ວາງໃຈແລະເປັນຜູ້ໃຫ້ຄຳປຶກສາແກ່ລັດຖະບານ,ຊ່ວຍປະສານກັບບັນດາພາກສ່ວນທີ່ມີສ່ວນຮ່ວມໃນການພັດທະນາປະເທດ ເຊັ່ນ: ໜ່ວຍງານລັດຖະບານ, ບັນດາຄູ່ຮ່ວມພັດທະນາສາກົນ, ປະຊາຊົນ, ທຸລະກິດ, ແລະ ສື່ມວນຊົນ. ທັງໝົດເຫລົ່ານີ້ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 7 ປີ 2011-2015, ເຊິ່ງມີເປົ້າໝາຍຫລັກໃນການບັນລຸ, “ການເຕີບໂຕທີ່ເທົ່າທຽມກັນ” ທີ່ຈະຊ່ວຍປັບປຸງຊີວິດການເປັນຢູ່ຂອງປະຊາຊົນທຸກຂົງເຂດໃນສັງຄົມໃຫ້ດີຂຶ້ນ.





**70.5** ລ້ານໂດລາສະຫະລັດ:
ຈຳນວນງົບປະມານທຶນຊ່ວຍເຫລືອທັງໝົດ ທີ່ຈະນຳໃຊ້ ເພື່ອບັນລຸຜົນ
ໄດ້ຮັບທີ່ຄາດຫວັງໄວ້ ສຳລັບ ປີ 2012 ເຖິງ 2015

**50%** ອັດຕາສ່ວນຂອງບັນດາເປົ້າໝາຍສະຫັດສະວັດ (MDGs) ທີ່ສາມາດປະຕິບັດໄດ້ ເພື່ອບັນລຸເປົ້າໝາຍທີ່ວາງໄວ້ພາຍໃນປີ 2015



# ຮັບປະກັນການ ກ້າວໄປ ສູ່ການຫຼຸດພົ້ນອອກຈາກ ສະພາບປະເທດດ້ອຍພັດທະນາຢ່າງມີປະສິດທິພາບ

ການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໄປສູ່ປະເທດທີ່ມີລາຍຮັບປານກາງສ່ອງແສງເຖິງຜົນສຳເລັດໃນການພັດທະນາ ແລະ ສະແດງໃຫ້ເຫັນເຖິງຄວາມສາມາດຂອງປະເທດໃນການບັນລຸການ ຫັນປ່ຽນເສດຖະກິດຂອງຕົນ. ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ອາດນຳພາໃຫ້ມີການເພີກຖອນຜົນປະໂຫຍດຕ່າງໆ ທີ່ ຕິດພັນກັບສະຖານະການເປັນປະເທດດ້ອຍພັດທະນາ ເຊິ່ງອາດສ້າງຄວາມຫຍຸ້ງຍາກຕໍ່ການພັດທະນາປະ ເທດໄດ້.

ລັດຖະບານ ແຫ່ງ ສປປ ລາວ ໄດ້ກຳນົດເປົ້າໝາຍໂດຍລວມ ໃນການຫລຸດພົ້ນຈາກສະພາບເປັນປະເທດດ້ອຍພັດທະນາໃຫ້ສຳເລັດພາຍໃນປີ2020.ການບັນລຸເປົ້າໝາຍສະຫັດສະວັດດ້ານການ ພັດທະນາໃນການຫລຸດຜ່ອນຄວາມທຸກຍາກໃຫ້ໄດ້ ເຄິ່ງໜຶ່ງພາຍໃນປີ 2015 ຈະດຳເນີນໄປພ້ອມໆກັນ ເພື່ອເຮັດໃຫ້ເປົ້າໝາຍດັ່ງກ່າວປະກົດຜົນເປັນຈິງ. ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ໃຫ້ ການຊ່ວຍເຫລືອ ສປປ ລາວ ຢ່າງຕັ້ງໜ້າ ໃນການ ຫລຸດພົ້ນອອກຈາກສະພາບເປັນປະເທດດ້ອຍ ພັດທະນາໂດຍການຊ່ວຍ ເຫລືອຄົ້ນຄ້ວາ "ແນວທາງ ຍຸດທະສາດຫຼື ທີ່ເອີ້ນວ່າ road map" ທີ່ກຳນົດ ຄວາມຕ້ອງການແລະ ຕາຕະລາງເວລາ - ເພື່ອການຈັດຕັ້ງປະຕິບັດຍຸດທະສາດການຫລຸດພົ້ນຢ່າງມີປະສິດທິຜົນ. ສິ່ງນີ້ຈະເອື້ອອຳ ນວຍໃຫ້ປະເທດສາມາດຮັກສາຜົນສຳເລັດສຳຄັນໆຂອງຕົນ ໃນການພັດທະນາມະນຸດແລະ ຫລຸດຜ່ອນ ຄວາມສ່ຽງໃນການຫວນກັບຄືນສູ່ສະພາບເປັນປະເທດດ້ອຍພັດທະນາໃນພາຍຫຼັງ.




# ແນວທາງຕໍ່ໜ້າ

UNDP ພັດທະນາແຜນງານສາກົນຂອງຕົນ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການ, ບູລິມະສິດຂອງບັນດາປະເທດ ແລະ ປະຊາຊົນທີ່ຕົນຮັບໃຊ້. ຈຸດເດັ່ນລວມມີ:

• ປ່ຽນແປງຈາກການ ສົ່ງເສີມ ມາເປັນ ການກະຕຸກຊຸກຍູ້ເພື່ອເລັ່ງລັດການບັນລຸເປົ້າໝາຍສະຫັດສະວັດດ້ານ ການພັດທະນາ ໃຫ້ໄດ້ພາຍໃນປີເປົ້າໝາຍ ຄືປີ 2015, ເນັ້ນໜັກນຳໃຊ້ ບັນດາທາງເລືອກທີ່ສ້າງສັນ ເພື່ອເຂົ້າເຖິງ ຜູ້ທີ່ບໍ່ສາມາດເຂົ້າເຖິງໄດ້ໃນບັນດາປະເທດ ຕ່າງໆ ເຊັ່ນ ສປປ ລາວ

• ເນັ້ນໜັກໃສ່ປັບປຸງວຽກງານການປົກຄອງທ້ອງຖິ່ນທີ່ຕິດພັນກັບທຸກໆຂົງເຂດວຽກງານຂອງຕົນ (ຄວາມທຸກຍາກ, ການປົກຄອງ, ການປ້ອງກັນ ແລະ ແກ້ໄຂຜົນກະທົບຈາກ ໄພທຳມະຊາດ, ສິ່ງແວດລ້ອມ, ການຢຸດ ແລະ ຫລຸດຜ່ອນການຕິດເຊື້ອເຮສໄອວີ ແລະ ພະຍາດເອດ, ການສົ່ງເສີມສິດສະເໝີພາບລະຫວ່າງຍິງຊາຍ, ແລະ ການພັດທະນາຂີດຄວາມສາມາດ)

• ເນັ້ນໜັກເພີ່ມຂຶ້ນ ການຟື້ນຟູເສດຖະກິດ ຈາກວິກິດການ ແລະ ໄພພິບັດ, ລວມທັງການສ້າງວຽກເຮັດງານທຳ ແລະ ໂຄງການສ້າງລາຍຮັບຕ່າງໆ

• ໃຫ້ການສະໜັບສະໜູນການພັດທະນາ ແລະ ຈັດຕັ້ງປະຕິບັດພັດທະນາຍຸດທະສາດການຫລຸດຜ່ອນ ການ ປ່ອຍແກ໊ດເຮືອນແກ້ວ ແລະ ຟື້ນຟູດິນຟ້າອາກາດ ຫຼາຍຂຶ້ນ

• ຊຸກຍູ້ເພື່ອຮັບປະກັນວ່າ ການໃຫ້ທຶນດ້ານສິ່ງແວດລ້ອມ ແມ່ນເນັ້ນໜັກໃສ່ການສ້າງຜົນປະໂຫຍດຕໍ່ຜູ້ທຸກ ຍາກເປັນຫລັກ

# ແຜນງານ ພົ້ນເດັ່ນ ຢູ່ ສປປ ລາວ

ກອງທຶນສິ່ງແວດລ້ອມໂລກ (GEF) ເຊິ່ງເປັນແຜນງານທຶນຊ່ວຍເຫຼືອລ້າຂະໜາດນ້ອຍ, ຈັດຕັ້ງປະຕິບັດໂດຍ UNDP, ສະໜັບສະໜູນໂຄງການປັບປຸງຊີວິດການເປັນຢູ່ຢ່າງຍືນຍົງໃຫ້ແກ່ 60 ຊຸມຊົນ ຢູ່ທົ່ວ ສປປ ລາວ. ໂຄງການເຂື່ອນໄຟຟ້າຂະໜາດນ້ອຍ ຢູ່ໄຊຍະບູລີ ໄດ້ສະໜອງໄຟຟ້າໃຫ້ແກ່ຊາວບ້ານຕະຫລອດປີ.

UNDP ໄດ້ເປັນປະທານຮ່ວມ ໃນການດຳເນີນກອງປະຊຸມໂຕະມົນ ເພື່ອປັບປຸງປະສິດທິຜົນຂອງທຶນຊ່ວຍເຫລືອເພື່ອການພັດທະນາ ແລະ ຮັບປະກັນການປະສານສົມທົບທີ່ດີຂຶ້ນລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມພັດທະນາ, ເຊິ່ງປະກອບສ່ວນຊ່ວຍໃນການພັດທະນາໃນຂອບເຂດທົ່ວປະເທດ.

**6.25 ລ້ານຄົນ** ປະຊາກອນ ຢູ່ ສປປ ລາວ (2010)

**17** ແຂວງ ຢູ່ ສປປ ລາວ




ໂຄງການສົ່ງເສີມແກ້ໄຂຄວາມທຸກຍາກທີ່ຕິດພັນກັບສິ່ງແວດລ້ອມ ທີ່ກຳລັງດຳເນີນຢູ່ ແຂວງຜົ້ງສາລີ ແລະ ອີກສາມແຂວງ, ມີຈຸດປະສົງເພື່ອຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມຈາກໂຄງການລົງທຶນຂອງພາກເອກະຊົນ ແລະ ເພື່ອຮັບປະກັນວ່າ ຊຸມຊົນທ້ອງຖິ່ນໄດ້ຮັບຜົນປະໂຫຍດຈາກການລົງທຶນດັ່ງກ່າວ.

UNDP ໄດ້ສ້າງ ລາຍການວິທະຍຸທີ່ດຳເນີນໂດຍຊຸມຊົນ ເຊິ່ງເປັນລາຍການທຳອິດຂອງປະເທດ ເລີ່ມ ຈາກເມືອງຄູນ ເຊິ່ງໄດ້ອອກອາກາດເປັນສາມພາສາຊົນເຜົ່າ: ລາວ ລມຸ່, ຂະມຸ ແລະ ມົ້ງ.

ອົງການ UXO ລາວເກັບກູ້ລະເບີດທີ່ຍັງບໍ່ແຕກ ໃນແຂວງທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ຄື ແຂວງສະຫວັນນະເຂດ ແລະອີກ8 ແຂວງ ໂດຍການສະໜັບສະໜູນຈາກ UNDP.

ໂຄງການປັບປຸງ ແລະ ບູລະນະການປົກຄອງ (GPAR) ປັບປຸງການໃຫ້ບໍລິການຂອງລັດແກ່ທ້ອງຖິ່ນ ຢູ່ແຂວງເຊກອງແລະອີກສີ່ແຂວງ. ແຜນງານດັ່ງກ່າວ ຈະໄດ້ຮັບການຜັນຂະຫຍາຍຕື່ມໃນປີຕໍ່ໜ້າ.

# ສະພາບການ ພັດທະນາ ຢູ່ ສປປ ລາວ

ສປປ ລາວ ໄດ້ຮັບການຈັດເປັນ 1 ໃນ 10 ປະເທດຂອງໂລກທີ່ມີຄວາມ “ກ້າວໜ້າໄວ” ໃນດ້ານຄວາມຄືບໜ້າຂອງການພັດທະນາມະນຸດ - ໂດຍສະເພາະທາງດ້ານການຫລຸດຜ່ອນຄວາມ ທຸກຍາກທີ່ບໍ່ພົວພັນກັບ ການສ້າງລາຍຮັບ - ໃນໄລຍະ 20 ປີທີ່ຜ່ານມາ. ຜົນສຳເລັດທີ່ຍາດມາໄດ້ ແມ່ນຈຳນວນ ປະຊາກອນທີ່ທຸກຍາກຫຼຸດລົງ; ຈຳນວນນັກຮຽນເຂົ້າຊັ້ນປະຖົມສູງຂຶ້ນ; ອັດຕາການຕາຍຂອງເດັກຫຼຸດລົງ; ຈຳນວນແມ່ຍິງເຮັດວຽກ ໃນຂົງເຂດການເມືອງຢູ່ຂັ້ນສູນກາງເພີ່ມຂຶ້ນ ຊຶ່ງຍັງເປັນໜຶ່ງໃນບັນດາປະເທດທີ່ມີຈຳນວນສູງສຸດໃນພາກພື້ນ; ວຽກງານຕ້ານກັບພະຍາດວັນນະໂລກ ແລະ ໄຂ້ຍຸງ ມີຄວາມຄືບໜ້າ; ແລະສາມາດຮັບປະກັນການເຂົ້າເຖິງ ນ້ຳດື່ມທີ່ສະອາດປອດໄພ ແລະ ມີລະບົບສຸຂາພິບານຂັ້ນພື້ນຖານຢູ່ເຂດຕົວເມືອງ.

ໃນຂະນະດຽວກັນນັ້ນ, ບັນດາສິ່ງທ້າທາຍຕ່າງໆທີ່ສຳຄັນທີ່ຍັງຄົງຄ້າງຢູ່ ລວມມີ ບັນຫາການຂາດແຄນ ວຽກເຮັດງານທຳໂດຍສະເພາະໃນຂົເຂດທີ່ນອກເໜືອຈາກ ວຽກງານກະສິກຳ; ການຫລຸດຜ່ອນຈຳນວນເດັກທີ່ຂາດສານອາຫານ ລວມທັງການຮັບປະກັນ ວ່ານັກຮຽນ, ໂດຍສະເພາະເດັກຍິງ, ສຳເລັດການສຶກສາຂັ້ນປະຖົມ ແລະ ສືບຕໍ່ ຮຽນຊັ້ນມັດທະຍົມ ຍັງບໍ່ມີຄວາມຄືບໜ້າ, ການມີສ່ວນຮ່ວມຂອງແມ່ຍິງໃນການຕັດສິນ ບັນຫາສຳຄັນ ຢູ່ຂັ້ນ ທ້ອງຖິ່ນແມ່ນຍັງຈຳກັດ; ອັດຕາການຕາຍຂອງແມ່ຍັງມີສູງ; ການສູນເສຍຊັບພະຍາກອນຢ່າງໄວວາ, ຫຼື ຍັງມີ ການຄຸ້ມຄອງຊັບພະຍາກອນ ທຳມະຊາດທີ່ບໍ່ຍືນຍົງ, ເຊັ່ນ ປ່າໄມ້, ຊັບພະຍາກອນແຫລ່ງນ້ຳ ແລະ ຊີວະນາໆ ພັນ; ແລະການຫລຸດຜ່ອນ ຜົນກະທົບທີ່ເກີດຂຶ້ນປະຈຳຈາກໄພທາງທຳມະຊາດຍັງ ບໍ່ທັນພຽງພໍ.

ໂດຍລວມແລ້ວ, ສິ່ງທ້າທາຍໃຫ່ຍໆໃນການພັດທະນາ ສປປ ລາວ ແມ່ນການຮັບປະກັນວ່າ ຜົນປະໂຫຍດຈາກການເຕີບໂຕດ້ານເສດຖະກິດທີ່ມີອັດຕາສູງນັ້ນ ມີການແບ່ງປັນຢ່າງສົມສ່ວນ ແລະ ຖືກຜັນຂະຫຍາຍເປັນການພັດທະນາມະນຸດແບບຍືນຍົງເພື່ອທຸກຄົນ,ລວມທັງແມ່ຍິງ,ຊົນເຜົ່າກຸ່ມນ້ອຍ,ແລະຈຳນວນປະຊາກອນສອງສ່ວນສາມ ທີ່ອາໃສຢູ່ເຂດຊົນນະບົດຫ່າງໄກສອກຫລີກ. ຊ່ອງວ່າງຄວາມແຕກຕ່າງ ລະຫວ່າງຄົນທຸກ ແລະ ຄົນຮັ່ງ, ແມ່ຍິງ ແລະ ຜູ້ຊາຍ, ຊົນເຜົ່າກຸ່ມນ້ອຍ ແລະ ຜູ້ຢູ່ອາໃສໃນແຕ່ລະຂົງເຂດພາກພື້ນຂອງປະເທດ ທີ່ນັບມື້ນັບກວ້າງອອກນັ້ນ ຈຳເປັນຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ ຖ້າຫາກ ສປປລາວຕ້ອງການຈະບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ໃຫ້ໄດ້ພາຍໃນປີ 2015. ຄວາມພະຍາຍາມໃນການກະຕຸ້ນເພື່ອບັນລຸເປົ້າໝາຍສະຫັດສະວັດ ແມ່ນກຳລັງໄດ້ຮັບການດຳເນີນໄປ ພາຍໃຕ້ 6 ຂົງເຂດບູລິມະສິດ.

ສິ່ງສຳຄັນສະເພາະແມ່ນຊ່ວຍຮັບປະກັນວ່າ ການຂະຫຍາຍຕົວດ້ານເສດຖະກິດຢ່າງວ່ອງໄວ ຂອງ ສປປ ລາວ -ໂດຍສະເພາະຈາກການລົງທຶນຂອງຕ່າງປະເທດໂດຍກົງເຊັ່ນ ຂຸດຄົ້ນບໍ່ແຮ່, ຂຸດຄົ້ນປ່າໄມ້ ແລະ ເຂື່ອນໄຟຟ້າ, ດຳເນີນການດ້ວຍຮູບແບບທີ່ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ ແລະລາຍຮັບທີ່ສ້າງຂຶ້ນແມ່ນກະຈາຍຜົນປະໂຫຍດຕໍ່ທຸກຄົນ. ນອກຈາກນີ້, ການປ່ຽນແປງດ້ານດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ ອາດມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ການພັດທະນາປະເທດ ແລະ ເສດຖະກິດ. ສິ່ງທ້າທາຍສະເພາະສຳລັບ ສປປ ລາວ ແມ່ນການປະເຊີນກັບບັນຫາລະເບີດທີ່ຍັງບໍ່ແຕກ (UXO) ທີ່ຍັງສືບຕໍ່ເປັນອັນຕະລາຍຕໍ່ຊີວິດ ແລະ ຈຳກັດການຜະລິດ ແລະ ການຂະຫຍາຍການຜະລິດກະສິກຳ.



**50** ສ່ວນຮ້ອຍຂອງປະຊາກອນ ມີອາຍຸຕ່ຳກວ່າ 20 ປີ

**138** ອັນດັບຂອງ ສປປ ລາວ ໃນດັດຊະນີການພັດທະນາມະນຸດ, ຈາກຈຳນວນທັງໝົດ 187 ປະເທດ

**7.9%** ອັດຕາສະເລ່ຍການເຕີບໂຕດ້ານເສດຖະກິດແຫ່ງຊາດຕໍ່ປີ

**70%** ອັດຕາສ່ວນຂອງການເອື່ອຍອີງໃສ່ການລົງທຶນໂດຍກົງຈາກຕ່າງປະເທດ

**80%** ອັດຕາສ່ວນຂອງປະຊາກອນທີ່ມີອາຊີບກະສິກຳແບບກຸ້ມຕົນເອງ

# ການປະກອບສ່ວນຂອງພວກເຮົາ

## ຕໍ່ສູ້ກັບຄວາມທຸກຍາກ

ພວກເຮົາມຸ່ງໝັ້ນເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs), ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 7 ປີ 2011 -2015 ແລະ, ທີ່ເປັນແຜນງານຍຸດທະສາດເພື່ອເຮັດໃຫ້ ສປປ ລາວ ຄ່ອຍໆກາຍມາເປັນປະເທດທີ່ມີສະຖານະລາຍຮັບປານກາງ, ໂດຍຜ່ານການຊ່ວຍເຫລືອກະຊວງແຜນການ ແລະ ການລົງທຶນແບບຮອບດ້ານ. ພວກເຮົາໃຫ້ຄວາມສຳຄັນຕໍ່ການພັດທະນາທີ່ເທົ່າທຽມກັນ, ໂດຍການກຳນົດຂອບເຂດ ແລະ ຫົວຂໍ້ສຳຄັນໃນການພັດທະນາເພື່ອສົນທະນາ ແລະ ຮ່ວມກັນແກ້ໄຂບັນຫາໂດຍຜ່ານຂະບວນການໂຕະມົນ ເຊິ່ງນີ້ຊ່ວຍໃຫ້ລັດຖະບານສາມາດເຂົ້າເຖິງທຶນຮອນ ທີ່ອາດເຂົ້າເຖິງໄດ້ຍາກຖ້າບໍ່ມີຂະບວນການເຫລົ່ານີ້ ແລະ ສາມາດແກ້ໄຂບັນຫາການພັດທະນາທີ່ພົ້ນເດັ່ນຢ່າງມີເປົ້າໝາຍທີ່ຊັດເຈນ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ.

ເພື່ອສະໜັບສະໜູນ ໃຫ້ມີການສ້າງນະໂຍບາຍທີ່ພິຈາລະນາຢ່າງຖີ່ຖ້ວນ, ພວກເຮົາກຳລັງຊ່ວຍປັບປຸງວຽກງານວາງແຜນ ແລະ ການຕິດຕາມ/ປະເມີນຜົນ, ໂດຍການສ້າງລະບົບຖານຂໍ້ມູນທີ່ເຂັ້ມແຂງ, ທີ່ໃຫ້ສາມາດໄຈ້ແຍກຂໍ້ມູນຍິງຊາຍ, ແລະ ຝຶກອົບຮົມບຸກຄະລາກອນດ້ານສະຖິຕິ ທີ່ຊ່ວຍໃຫ້ການພັດທະນາຕົວເລກສະຖິຕິມີຄວາມໜ້າເຊື່ອຖືຍິ່ງຂຶ້ນ. ໃນການຊ່ວຍໃຫ້ ສປປ ລາວ ຂ້າມຜ່ານ ແລະ ກາຍເປັນປະເທດທີ່ມີລາຍຮັບປານກາງຢ່າງສຳເລັດໄດ້ນັ້ນ, ພວກເຮົາຊ່ວຍສ້າງຂີດຄວາມສາມາດຂອງລັດຖະບານ ໃຫ້ສາມາດຍາດແຍ່ງເອົາຜົນປະໂຫຍດສູງສຸດທີ່ຈາກການເຊື່ອມສານເຂົ້າໃນສະມາຄົມບັນດາປະເທດອາຊີຕາເວັນອອກສ່ຽງໃຕ້ (ASEAN) ພາຍໃນປີ 2015. ສິ່ງນີ້ຈະຊ່ວຍເສີມຂະຫຍາຍຄວາມສາມາດຂອງປະເທດໃນການແຂ່ງຂັນດ້ານເສດຖະກິດໃນລະດັບ ສາກົນ; ເສີມສ້າງປະສິດທິຜົນ “ເສດຖະກິດການປົກຄອງ” ຢູ່ ສປປ ລາວ ໃນບັນດາຂົງເຂດ ເຊັ່ນ: ການຄ້າ, ການເງິນ ແລະ ການປົກປ້ອງຊັບສິນທາງປັນຍາ; ແລະ ຊຸກຍູ້ການຫລຸດຜ່ອນຄວາມທຸກຍາກ.



# ການປະເມີນຄວາມເປັນຢູ່ຂອງປະຊາຊົນໃນໄລຍະຍາວ

ສິ່ງສຳຄັນໃນການຂະຫຍາຍທາງເລືອກຂອງປະຊາຊົນ ຢູ່ ສປປ ລາວ ໃຫ້ກວ້າງອອກ ແມ່ນການຊ່ວຍເຫລືອຜູ້ທຸກຍາກ ໃຫ້ມີຄວາມຄວາມສົມບູນພູນສຸກຫຼາຍຂຶ້ນ: ເຮັດໃຫ້ປະຊາຊົນມີຊີວິດທີ່ຍືນຍາວ ແລະ ອຸດົມສົມບູນ, ມີຄວາມຮູ້, ແລະ ສາມາດເຂົ້າເຖິງຊັບພະຍາກອນທີ່ຈຳເປັນໃນການດຳລົງຊີວິດແບບພໍພຽງ, ແລະ ສາມາດມີສ່ວນຮ່ວມໃນຊຸມຊົນ. ເພື່ອປະຕິບັດສິ່ງເຫລົ່ານີ້ຢ່າງເປັນລະບົບ, ພວກເຮົາຈຳເປັນຕ້ອງເຂົ້າໃຈເຖິງສະ ພາບຄວາມທຸກຍາກໃນປະເທດຢ່າງແທ້ຈິງກ່ອນ ເພື່ອທີ່ພວກເຮົາ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈະສາມາດ ຊຸກຍູ້ໃຫ້ມີການປ່ຽນແປງທີ່ດີໄດ້.

ເຄື່ອງມືທີ່ສຳຄັນຂອງ UNDP ໃນການສະເໜີວິທີການພັດທະນາທີ່ຫຼາກຫຼາຍ ໃນ ສປປ ລາວ ແລະ ການຊ່ວຍເຫລືອເພື່ອພັດທະນາວິໄສທັດຮ່ວມກັນ ແມ່ນ ບົດລາຍງານການພັດທະນາມະນຸດແຫ່ງຊາດ (NHDR). ບົດລາຍງານດັ່ງກ່າວມີທັງໝົດສີ່ສະບັບ ຊຶ່ງຈັດເຮັດຂຶ້ນໃນລະຫວ່າງປີ 1998 ແລະ 2011, ຊຶ່ງສະເໜີວິທີ ການວັດແທກຄວາມກ້າວໜ້າຂອງມະນຸດໃນປະເທດ ໂດຍດຸ່ນດ່ຽງການວິເຄາະການເຕີບໂຕດ້ານເສດຖະ ກິດ ແລະ ການພັດທະນາດ້ານສັງຄົມ, ລວມທັງເສີມສ້າງຂີດຄວາມສາມາດທາງດ້ານວຽກງານສະຖິຕິແຫ່ງ ຊາດ ແລະ ການວິເຄາະບັນຫາ. ໃນທາງກົງກັນຂ້າມ, ບົດລາຍງານການພັດທະນາມະນຸດ ແຫ່ງຊາດ ກໍ່ຍັງເປັນພາຫະນະທີ່ສຳຄັນໃນການບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ. ບົດລາຍງານນີ້ໄດ້ຄົ້ນຄວ້າ ບັນດາຫົວຂໍ້ທີ່ເປັນບູລິມະສິດຂອງການພັດທະນາແຫ່ງຊາດ ເຊິ່ງລວມມີ ການແນະນຳແນວຄວາມຄິດຂອງການພັດທະນາມະນຸດ; ວິທີເພີ່ມຄວາມຄືບໜ້າໃຫ້ແກ່ວຽກງານພັດທະນາຊົນນະບົດ; ວິທີທາງທີ່ດີທີ່ສຸດໃນການຊຸກຍູ້ການຄ້າສາກົນ ແລະ ພັດທະນາມະນຸດໄປພ້ອມໆກັນ; ແລະ ການປັບປຸງການພັດທະນາມະນຸດ ໂດຍຜ່ານການສ້າງວຽກເຮັດງານທຳໃຫ້ຫລາຍຂຶ້ນ ແລະ ສ້າງໂອກາດໃນການດຳລົງຊີວິດທີ່ດີຂຶ້ນ.






**40%** ຄວາມທຸກຍາກ ຢູ່ ສປປ ລາວ ແມ່ນຫລຸດລົງໃນລະຫວ່າງປີ 1992 ແລະ 2010

**2 ເຖິງ 1** ອັດຕາສ່ວນຂອງປະຊາກອນທີ່ທຸກຍາກໃນເຂດຊົນນະບົດຕໍ່ກັບເຂດຕົວເມືອງ

**1 ໃນ 3** ອັດຕາສ່ວນຂອງຄົວເຮືອນເຂດຊົນນະບົດທີ່ມີຄວາມຮັບປະກັນດ້ານສະບຽງອາຫານ

**40%** ອັດຕາສ່ວນຂອງເດັກນ້ອຍຕໍ່າກວ່າ 5 ປີ ທີ່ຂາດສານອາຫານຢ່າງຮຸນແຮງ

**25%** ອັດຕາສ່ວນຂອງປະຊາກອນທີ່ອາໄສຢູ່ຫ່າງໄກຈາກໂຮງໝໍທີ່ມີເຄື່ອງມືຄົບຖ້ວນທີ່ໃຊ້ເວລາເດີນທາງຫລາຍກວ່າ 2 ຊົ່ວໂມງ



*ປະຊາຊົນຕ້ອງມາກ່ອນ*

# ສົ່ງເສີມການຮ່ວມມືເພື່ອພັດທະນາ ແລະ ເຮັດໃຫ້ທຶນການຊ່ວຍເຫລືອມີປະສິດທິຜົນຍິ່ງຂຶ້ນ

ການດຳເນີນກອງປະຊຸມໂຕະມົນ ກ່ຽວກັບທິດທາງຍຸດທະສາດການພັດທະນາ ເປັນສິ່ງສຳຄັນທີ່ສຸດຂອງການຮ່ວມມືເພື່ອການພັດທະນາຂອງ UNDP ກັບ ສປປ ລາວ. UNDP ໄດ້ຮັບບົດບາດສຳຄັນ ເປັນປະທານຮ່ວມ ດຳເນີນກອງປະຊຸມໂຕະມົນຮ່ວມກັບລັດຖະບານ, ເພື່ອຊ່ວຍຮັບປະກັນວ່າທຶນການຊ່ວຍເຫຼືອປະເທດ ແມ່ນມີໝາກຜົນສູງສຸດ ແລະ ສອດຄ່ອງກັບບູລິມະສິດຂອງຊາດ. ໂດຍລວມແລ້ວ, ພວກເຮົາອີງໃສ່ຄວາມເຊື່ອໝັ້ນທີ່ໄດ້ຮັບ ແລະ ບົດບາດເປັນທີ່ປຶກສາດ້ານນະໂຍບາຍຍຸດທະສາດ ເພື່ອຊ່ວຍລັດຖະບານໃນການກະກຽມດຳເນີນກອງປະຊຸມໂຕະມົນລະດັບສູງ ທີ່ຈັດຂຶ້ນເປັນປະຈຳໃນທຸກໆສາມປີ, ແລະ ລວມທັງກອງປະຊຸມໂຕະມົນປະຈຳປີ.

ໂດຍສະເພາະແລ້ວ, ພວກເຮົາຊ່ວຍຮັບປະກັນວ່າ ຄະນະຮັບຜິດຊອບຂະແໜງການໃນຂະບວນການໂຕະມົນ ສາມາດເຊື່ອມໂຍງວຽກງານຂອງເຂົາເຈົ້າ ເຂົ້າກັບ ການບັນລເປົ້າໝາຍການພັດທະນາທີ່ສຳຄັນໆຂອງຊາດຢ່າງມີປະສິດທິຜົນ, ນີ້ລວມທັງການບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ແລະ ການຫລຸດພົ້ນອອກຈາກສະຖານະການເປັນປະເທດດ້ອຍພັດທະນາ. ຕົວຢ່າງເຊັ່ນ: ບັນຫາການຂາດສານອາຫານຂອງເດັກໄດ້ຖືກຍົກຂຶ້ນໃນໄລຍະດຳເນີນກອງປະຊຸມໂຕະມົນ, ຊຶ່ງສົ່ງຜົນໃຫ້ລັດຖະບານມີການພັດທະນາແຜນໂພຊະນາການ ທີ່ຕິດພັນກັບຫຼາຍໆຂະແໜງການ. ນອກຈາກນີ້, ການໂຄສະນາເຜີຍແຜ່ກ່ຽວກັບຜົນສະທ້ອນຂອງການເຕີບໂຕດ້ານເສດຖະກິດໂດຍນຳໃຊ້ຊັບພະຍາກອນທຳມະຊາດເປັນຕົ້ນຕໍນັ້ນ ໄດ້ຊ່ວຍໃຫ້ລັດຖະບານໄດ້ກັບມາທົບທວນຢ່າງຄັກແນ່ກວ່າເກົ່າ ໂດຍສະເພາະກ່ຽວກັບ ການໃຫ້ຄວາມສຳຄັນຫຼາຍຂຶ້ນຕໍ່ການຄັດເລືອກຄຸນນະພາບຂອງການລົງທຶນໂດຍກົງຈາກຕ່າງປະເທດ. ອີກຈຸດພິເສດໜຶ່ງ ແມ່ນຍັງແນໃສ່ເພື່ອຮັບປະກັນການເຕີບໂຕ ແລະ ການພັດທະນາທີ່ເທົ່າທຽມກັນສຳລັບທັງແມ່ຍິງ ແລະ ຜູ້ຊາຍ, ລວມທັງການຊ່ວຍເຫລືອທີ່ມີຈຸດສຸມຍິ່ງຂຶ້ນ ໃນຂົງເຂດຍຸດທະສາດເພື່ອຄວາມສະເໝີພາບລະຫວ່າງຍິງຊາຍ ເຊັ່ນ ການຝຶກອົບຮົມຄວາມເປັນຜູ້ນຳແກ່ແມ່ຍິງ.

ວິທີການ "ແລກປ່ຽນຄວາມຮູ້ນຳກັນ" ຫຼື Community of Practice ເອື້ອອຳນວຍການສົນທະນາແລກປ່ຽນຂໍ້ມູນ ແລະ ປຶກສາຫາລືດ້ານນະໂຍບາຍທີ່ສຳຄັນພາຍໃນກຸ່ມຄະນະຮັບຜິດຊອບຂະແໜງການ ກຳລັງໄດ້ຮັບການທົດລອງ; ຍິ່ງກວ່ານັ້ນ, ຄູ່ຮ່ວມພັດທະນາທຸກຝ່າຍສາມາດ ປະກອບສ່ວນເຂົ້າໃນກອງທຶນຮ່ວມພັດທະນາແບບບໍ່ສະເພາະ (Flexible Funding Facility), ເຊິ່ງແນໃສ່ການຊ່ວຍເຫຼືອແຜນງານທີ່ເນັ້ນໜັກໃຫ້ເຫັນ "ຜົນໄດ້ຮັບໄວ" ແລະ ລວມທັງການຄົ້ນຄ້ວາດ້ານນະໂຍບາຍຕ່າງໆ ທີ່ເໝາະສົມ ແລະ ຈຳເປັນສຳລັບໄລຍະຂ້າມຜ່ານຂອງປະເທດ. ເຊິ່ງນີ້, ຈະເຮັດໃຫ້ ບັນດາຜູ້ໃຫ້ທຶນສາມາດຊ່ວຍເຫຼືອວຽກງານຫລຸດຜ່ອນຄວາມທຸກຍາກໄປຕາມວິທີການທີ່ສອດຄ່ອງ ແລະ ທັນເວລາ ກວ່າເກົ່າ.

# ສົ່ງເສີມການປົກຄອງ ທີ່ມີປະສິດທິຜົນ

UNDP ສົ່ງເສີມການຕັດສິນໃຈທີ່ມີປະສິດທິຜົນ, ເປີດກວ້າງ ແລະ ໂປ່ງໃສ ເພື່ອປັບປຸງການປົກຄອງຢູ່ ສປປ ລາວ, ສະໜັບສະໜູນແຜນຍຸດທະສາດຂອງລັດຖະບານ ເພື່ອການປົກຄອງທີ່ມີປະສິດທິຜົນຈົນເຖິງປີ 2020. ສິ່ງນີ້ເປັນສູນກາງ ເພື່ອລວມເອົາບັນດາຄວາມຄືບໜ້າຂອງການພັດທະນາແຫ່ງຊາດຊຶ່ງສາມາດ ບັນລຸໄດ້ໃນ ຫຼາຍຂົງເຂດ ເຂົ້າເປັນໜຶ່ງ ແລະ ເພື່ອຮັບປະກັນວ່າ ການເຕີບໃຫຍ່ດັ່ງກ່າວມີຜົນປະໂຫຍດອັນດີຕໍ່ປະຊາຊົນ ທຸກທົ່ວໜ້າ ແລະ ບໍ່ມີອັນຕະລາຍຕໍ່ສິ່ງແວດລ້ອມ. ພວກເຮົາດຳເນີນງານໃນດ້ານການປັບປຸງການປົກຄອງ ແລະ ບໍລິຫານລັດ, ເສີມສ້າງຂະແໜງນິຕິກຳ, ລະບຽບກົດໝາຍ ແລະ ການເຂົ້າເຖິງຄວາມຍຸດຕິທຳ, ແລະ ເສີມສ້າງ ການເຂົ້າຮ່ວມຂອງປະຊາຊົນໃຫ້ເຂັ້ມແຂງຍິ່ງຂຶ້ນ. ໃນທັງໝົດສາມວຽກງານດັ່ງກ່າວ, ພວກເຮົາສົ່ງເສີມໂອກາດ ໃນການແຈ້ງບອກ, ການປຶກສາຫາລື ທີ່ມີປະໂຫຍດຕໍ່ປະເດັນການພັດທະນາທີ່ສຳຄັນຕ່າງໆ. ພວກເຮົາຍັງເຮັດ ໜ້າທີ່ເປັນຜູ້ນຳທາງສາກົນ ໃນຂະແໜງການປົກຄອງ, ລວມທັງການເປັນປະທານຮ່ວມໃນໜ່ວຍງານດ້ານການປົກຄອງ ຂອງຂະບວນການກອງປະຊຸມໂຕະມົນ.

ແຜນງານທີ່ພົ້ນເດັ່ນດ້ານການປົກຄອງ ຊຶ່ງແມ່ນແຜນງານປັບປຸງບູລະນະການປົກຄອງ (GPAR), ຊ່ວຍແກ້ໄຂ ບັນດາສິ່ງທ້າທາຍຕ່າງໆຂອງການພັດທະນາທ້ອງຖິ່ນ ແລະ ການຫລຸດຜ່ອນຄວາມທຸກຍາກ ໂດຍເສີມສ້າງຂີດ ຄວາມສາມາດ ຂອງການບໍລິຫານຂັ້ນເມືອງໃຫ້ເຂັ້ມແຂງຍິ່ງຂຶ້ນ ໂດຍສະເພາະໃນວຽກງານການວາງແຜນ, ການ ຄຸ້ມຄອງທີ່ອີງໃສ່ຜົນໄດ້ຮັບເປັນຫລັກ, ການຕິດຕາມ, ແລະ ການໃຫ້ບໍລິການທີ່ມີປະສິດທິຜົນ. ທີ່ເອົາໃຈໃສ່ເປັນ ພິເສດ ແມ່ນການເຮັດໃຫ້ຂັ້ນຕອນການດຳເນີນງານມີຄວາມກະທັດຮັດງ່າຍດາຍຍິ່ງຂຶ້ນ. ທັງໝົດເຫລົ່ານີ້ມີຄວາມຮີບດ່ວນ ເພື່ອຊ່ວຍໃຫ້ເປົ້າໝາຍຂອງປະເທດ ທີ່ຈະຄ່ອຍໆກາຍມາເປັນປະເທດທີ່ມີລາຍຮັບປານກາງພາຍໃນປີ 2020 ປະກົດເປັນຈິງ.

ເພື່ອເສີມສ້າງການມີສ່ວນຮ່ວມຂອງປະຊາຊົນໃນສະຖາບັນ ແລະ ລະບົບ ທີ່ໃຫ້ທິດຊີ້ນຳແກ່ຊີວິດການເປັນຢູ່ຂອງເຂົາເຈົ້າ, ພວກເຮົາແນໃສ່ໃຫ້ການສະໜັບສະໜູນສະພາແຫ່ງຊາດ ໃຫ້ມີປະສິດທິຜົນຍິ່ງຂຶ້ນ; ເປີດກວ້າງໃຫ້ປະຊາສັງຄົມ ເພື່ອເສີມຂະຫຍາຍການແລກປ່ຽນຢ່າງກວ້າງຂວາງ ແລະ ມີການແຈ້ງບອກຂໍ້ມູນ ໃຫ້ໄດ້ດີຍິ່ງຂຶ້ນ; ແລະ ໃຫ້ສິດສຽງ ແກ່ປະຊາຊົນທັງໝົດ, ໂດຍສະເພາະແມ່ນແມ່ຍິງ ແລະ ຊົນເຜົ່າສ່ວນນ້ອຍ, ໃຫ້ປະຊາຊົນມີສິດສຽງ ແລະ ຂໍ້ມູນເພີ່ມຂຶ້ນ ໂດຍຜ່ານການເຜີຍແຜ່ຂະຫຍາຍ ການສ້າງຕັ້ງສະຖານີວິທະຍຸຊຸມຊົນໃຫ້ເພີ່ມຂຶ້ນ.



# ສົ່ງເສີມຄວາມຍຸດຕິທຳເພື່ອທຸກຄົນ

UNDP ສະໜອງຄຳແນະນຳດ້ານນະໂຍບາຍ ແລະ ການຊ່ວຍເຫລືອດ້ານວິຊາການ ໃຫ້ແກ່ການລິເລີ່ມບູລະນະປັບປຸງຫຼາຍໆຂົງເຂດທີ່ສຳຄັນຕ່າງໆໃນຂະແໜງການນິຕິກຳ ແລະ ກົດໝາຍ. ສິ່ງເຫລົ່ານີ້ເນັ້ນໜັກໃສ່ການປັບປຸງລະບຽບນິຕິກຳທີ່ກ່ຽວຂ້ອງ;ການກະກຽມສຳລັບ, ແລະການຕອບສະໜອງຕໍ່, ຂັ້ນຕອນການທົບທວນສະຖານນະການສິດທິມະນຸດ (Universal Periodic Review) ກ່ຽວກັບຂໍ້ຜູກພັນຕໍ່ສາກົນ ດ້ານມາດຕະຖານສິດທິມະນຸດ; ການສ້າງສະຖາບັນຍຸດຕິທຳທີ່ຕອບສະໜອງ ແລະ ສາມາດເຂົ້າເຖິງໄດ້ງ່າຍຂຶ້ນ; ແລະ ການສ້າງບຸກຄະລາກອນທີ່ໄດ້ຮັບການຝຶກອົບຮົມເປັນຢ່າງດີ ແລະ ມີວິຊາການດ້ານນິຕິກຳ. ສິ່ງນີ້ສະໜອງໂອກາດເພີ່ມຂຶ້ນ ສຳລັບລະບົບຍຸດຕິທຳທີ່ມີຄວາມໂປ່ງໃສ ແລະ ຕອບສະໜອງໃຫ້ແກ່ທຸກໆພາກສ່ວນຂອງສັງຄົມ, ລວມທັງປະຊາຊົນທີ່ທຸກຍາກ, ແມ່ຍິງ, ກຸ່ມຊົນເຜົ່າຕ່າງໆ, ແລະ ເດັກນ້ອຍ.





**15** ຈຳນວນຂອງກົດໝາຍທີ່ໄດ້ຜ່ານການຮັບຮອງຈາກສະພາ ນັບແຕ່ປີ 2005

**1 ໃນ 4** ອັດຕາສ່ວນຂອງສະມາຊິກສະພາແຫ່ງຊາດທີ່ເປັນແມ່ຍິງ

**25%** ອັດຕາສ່ວນຂອງບັນດາເມືອງ ທີ່ໄດ້ຮັບການເສີມສ້າງດ້ານການບໍລິຫານ ເພື່ອການພັດທະນາທີ່ສຸມໃສ່ພັດທະນາຄົນທຸກຍາກ, ໂດຍການຊ່ວຍເຫລືອຈາກ UNDP

**80%** ການຫລຸດຜ່ອນດ້ານເວລາທີ່ຈຳເປັນໃນການຈົດທະບຽນທຸລະກິດ, ໂດຍຜ່ານການນຳໃຊ້ "ລະບົບການບໍລິການແບບປະຕູດຽວ" ທີ່ ສູນກາງບໍລິການແບບປະຕູດຽວ ໂດຍການສະໜັບສະໜູນຈາກ UNDP

**70%** ການເພີ່ມຂຶ້ນດ້ານຈຳນວນແມ່ຍິງຖືພາ ທີ່ນຳໃຊ້ບໍລິການດ້ານສຸຂະພາບຢູ່ເມືອງຄູນ ພາຍຫລັງທີ່ມີສະຖານີວິທະຍຸຊຸມຊົນອັນທຳອິດ, ນຳໃຊ້ອາສາສະໝັກທີ່ໄດ້ຮັບການຝຶກອົບຮົມໂດຍ UNDP, ອອກອາກາດແຜນງານຕ່າງໆກ່ຽວກັບສຸຂະພາບ, ສຸຂະອະນາໄມ ແລະ ການຮັກສາສຸຂະພາບຂອງແມ່



*ປະຊາຊົນຕ້ອງມາກ່ອນ*

# ເສີມສ້າງການແນໃສ່ຄົນທຸກຍາກເປັນຫລັກ ຢູ່ລະດັບເມືອງ

ນາງ ຕິມໃຈ, ອາຍຸ ສາມສິບເຈັດປີ, ກຳລັງຂົນພືດຜົນສວນຄົວໃສ່ລົດໄຖນາ ເພື່ອໄປຂາຍຢູ່ຕະຫລາດຢ່າງຕັ້ງໃຈ: ລາວຮູ້ດີວ່າ, ບໍ່ວ່າຈະແດດ ຫຼື ຝົນ, ລາວຕ້ອງໄປຂາຍເຄື່ອງຢູ່ຕະຫຼາດໃຫ້ໄດ້.ປະຈຸບັນໄດ້ມີເສັ້ນທາງເຊື່ອມຕໍ່ຫາບ້ານທີ່ຫ່າງໄກສອກຫລີກຄືບ້ານທໍກົງ, 800 ກິໂລແມັດໄປທາງທິດໃຕ້ຂອງນະຄອນຫລວງວຽງຈັນ, ກັບເສັ້ນທາງຫລວງ.

ນາງ ຕິມໃຈ ກ່າວວ່າ "ຫົນທາງທີ່ເຂົ້າເຖິງບ້ານ ເຮັດໃຫ້ຂ້ອຍສາມາດນຳເອົາໝາກພ້າວ, ໝາກໂມ, ໝາກອຶ ແລະ ພືດຜົນຕ່າງໆ ໄປຂາຍຢູ່ຕະຫລາດໄດ້". ໃນໄລຍະຜ່ານມາ, ໂດຍສະເພາະຊ່ວງລະດູຝົນ ສ່ວນຫລາຍ ລາວຈະ ສູນເສຍລາຍຮັບເນື່ອງຈາກເສັ້ນທາງເຂົ້າເຖິງບ້ານ ແມ່ນບໍ່ສາມາດໃຊ້ສັນຈອນໄດ້ ແລະ ພືດຜົນທີ່ຈະຂາຍ ຈະເນົ່າເສຍກ່ອນທີ່ຈະໄປເຖິງຕະຫລາດ. "ພາຍຫລັງມີເສັ້ນທາງທີ່ສ້າງໃໝ່ ຊ່ວຍໃຫ້ຂ້ອຍສ້າງລາຍຮັບເພີ່ມຂຶ້ນ, ແລະ ລາຍໄດ້ນີ້ ຂ້ອຍສາມາດຊື້ປຶ້ມ ແລະ ເຄື່ອງນຸ່ງນັກຮຽນສຳລັບໃຫ້ລູກຂ້ອຍໄປເຂົ້າໂຮງຮຽນໄດ້."

ເສັ້ນທາງໃໝ່ ແມ່ນຜົນໄດ້ຮັບໂດຍກົງຈາກການປັບປຸງຂີດຄວາມສາມາດຂອງການບໍລິຫານຂັ້ນເມືອງ ເພື່ອດຳ ເນີນໂຄງການກໍ່ສ້າງໂຄງລ່າງພື້ນຖານຂະໜາດນ້ອຍ. ນາງ ຕິມໃຈ ແລະ ຊາວບ້ານ ບ້ານທໍກົງ ໄດ້ລົງຄະແນນ ສຽງໃນປະຊຸມບ້ານ ໃຫ້ບູລິມະສິດແກ່ການກໍ່ສ້າງເສັ້ນທາງຜ່ານ. ຈາກນັ້ນ ໄດ້ມີການລະດົມທຶນຮອນໂດຍອຳ ນາດການປົກຄອງທ້ອງຖິ່ນ ໂດຍຜ່ານ ທຶນພັດທະນາເມືອງ (DDF), ຊຶ່ງເປັນອົງປະກອບໜຶ່ງຂອງແຜນ ງານປັບປຸງບູລະນະການປົກຄອງ (GPAR) ຢູ່ແຂວງສາລະວັນ, ໂດຍການສະໜັບສະໜູນຈາກ UNDP ແລະ ຄູ່ຮ່ວມພັດທະນາອື່ນໆ.

ແຜນງານດັ່ງກ່າວ ໄດ້ເນັ້ນໜັກໃສ່ການພັດທະນາສະຖາບັນ, ຂີດຄວາມສາມາດໃນການຄຸ້ມຄອງ ແລະ ວິຊາ ການ ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ເພື່ອຮັບປະກັນການ ໃຫ້ບໍລິການຂອງລັດທີ່ດີຂຶ້ນ. ເສັ້ນທາງໃໝ່, ເຊັ່ນ ບ້ານທໍກົງ, ບໍ່ພຽງແຕ່ປັບປຸງການ ເຂົ້າເຖິງຕະຫຼາດເທົ່ານັ້ນ ແຕ່ຍັງຊ່ວຍໃນການເຂົ້າເຖິງການບໍລິການ ຕ່າງໆຂອງລັດ ເຊັ່ນ: ສູນກາງບໍລິການປະຕູດຽວ, ຊຶ່ງສະໜອງການບໍລິການຕ່າງໆ ເຊັ່ນ: ການຂຶ້ນທະບຽນ ພາຫະນະ, ການອອກໃບອະນຸຍາດດຳເນີນທຸລະກິດ ແລະ ການອອກໃບຕາດິນ.

ສິ່ງນີ້ເປັນສິ່ງທີ່ຜັກດັນ ແລະ ສະແດງໃຫ້ເຫັນເຖິງຄວາມຍືນຍົງຂອງແຜນງານ GPAR, ຜົນໄດ້ຮັບ, ບົດຮຽນ ທີ່ຖອດຖອນໄດ້ ແລະ ບົດຮຽນທີ່ດີຕ່າງໆ ກຳລັງໄດ້ຮັບການສືບຕໍ່ດຳເນີນການ ໂດຍພາຍໃຕ້ການນຳພາ ຂອງລັດຖະບານ. ສິ່ງນີ້ຈະຮັບປະກັນວ່າການເນັ້ນໜັກໃສ່ການເສີມສ້າງລະບົບຂອງລັດທີ່ມີຢູ່ ຈະເຮັດໃຫ້ມີຜົນ ໄດ້ຮັບທີ່ດີຍິ່ງຂຶ້ນໃນປີຕໍ່ໆໜ້າ.



# ສະໜັບສະໜູນການຄຸ້ມຄອງສິ່ງແວດລ້ອມໃຫ້ດີຂຶ້ນ

ການເຕີບໂຕຂອງເສດຖະກິດໂດຍອີງໃສ່ຊັບພະຍາກອນທຳມະຊາດເປັນພື້ນຖານ - ບໍ່ແຮ່, ໄມ້, ໄຟຟ້ານໍ້າຕົກ, ແລະ ການປູກພືດອຸດສາຫະກຳຕ່າງໆ - ກຳລັງສ້າງຄວາມກົດດັນອັນໃໝ່ຕໍ່ຊັບສິນຂອງສິ່ງແວດລ້ອມ ທີ່ຕິດພັນກັບຮູບແບບການດຳລົງຊີວິດຂອງຊຸມຊົນໃນເຂດຊົນນະບົດ. ການຕັດໄມ້ທຳລາຍປ່າ ແມ່ນມີປະກົດການຢ່າງຮ້າຍແຮງ, ໃນຂະນະດຽວກັນການນຳໃຊ້ດິນ ແລະ ນໍ້າ ແບບບໍ່ຍືນຍົງກໍ່ກຳລັງ ເພີ່ມສູງຂຶ້ນ, ເຊັ່ນດຽວກັນກັບຄວາມກັງວົນຂອງປະຊາຊົນ ລາວທີ່ມີຕໍ່ກັບຄວາມໝັ້ນຄົງຂອງທີ່ດິນຂອງຄອບຄົວ ແລະ ຂອງຊຸມຊົນທີ່ຢູ່ໃນເຂດຊົນນະບົດ. ການເອື່ອຍອີງ ໃສ່ການກະສິກຳ ແລະ ຊັບພະຍາກອນທຳມະຊາດຂອງປະຊາຊົນເຂດຊົນນະບົດສ່ວນໃຫຍ່, ບວກກັບຊ່ອງວ່າງຢ່າງຕໍ່ເນື່ອງໃນການປັບໂຕຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ, ເຮັດໃຫ້ສະພາບຂອງປະເທດມີຄວາມເປາະບາງຕໍ່ຜົນກະທົບຈາກການປ່ຽນແປງຂອງດິນຟ້າອາກາດ ແລະ ການເພີ່ມຂຶ້ນຂອງໄພພິບັດທາງທຳມະຊາດ.

UNDP ສະໜັບສະໜູນການຈະເລີນເຕີບໂຕທີ່ບໍ່ເປັນອັນຕະລາຍຕໍ່ສິ່ງແວດລ້ອມ. ພວກເຮົາສົ່ງເສີມທຸກໆນະໂຍບາຍການພັດທະນາຂອງປະເທດ ແລະ ການວາງແຜນເພື່ອໃຫ້ຮັບຮູ້ເຖິງສາຍພົວພັນລະຫວ່າງ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຄວາມທຸກຍາກ, ລວມທັງການພັດທະນາບັນດາຕົວຊີ້ວັດ ຄວາມທຸກຍາກ-ສິ່ງແວດລ້ອມ ສຳລັບລະບົບການຕິດຕາມກວດກາ ແລະ ປະເມີນຜົນແຫ່ງຊາດ. ໂດຍສະເພາະ, ພວກເຮົາຊ່ວຍລັດຖະບານ ໃນການເພີ່ມສັດສ່ວນຂອງການລົງທຶນທີ່ມີຄຸນນະພາບ, ລວມທັງການລົງທຶນຂອງຕ່າງປະເທດ, ຊຶ່ງຈະເປັນປະໂຫຍດໃຫ້ແກ່ປະຊາຊົນທຸກທົ່ວໜ້າ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ. ສິ່ງນີ້ເລີ່ມຈາກການສະໜັບສະໜູນການຄັດເລືອກຜູ້ລົງທຶນທີ່ມີຄວາມເໝາະສົມ.

ນອກຈາກນີ້ພວກເຮົາຍັງໄດ້ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແກນຫລັກ ຂອງນະໂຍບາຍການຕອບໂຕ້ຕໍ່ການປ່ຽນແປງຂອງດິນຟ້າອາກາດຂອງລັດຖະບານຢ່າງຮອບດ້ານ, ໂດຍສະເພາະໃນຂະແໜງການທີ່ເປັນບູລິມະສິດ ເຊັ່ນ: ກະສິກຳ, ຊັບພະຍາກອນນໍ້າ ແລະ ປ່າໄມ້, ແລະ ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ.

ສຸດທ້າຍ, UNDP ເນັ້ນໜັກໃສ່ການປັບປຸງການປົກຄອງສິ່ງແວດລ້ອມ ແລະ ສົ່ງເສີມການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ອີງໃສ່ຊຸມຊົນເປັນຫລັກ. ສິ່ງທ້າທາຍຫລັກແມ່ນການເສີມສ້າງການມີສ່ວນຮ່ວມຂອງປະຊາຊົນໃນການຄຸ້ມຄອງບັນດາປ່າໄມ້, ອ່າງໂຕ່ງ ແລະ ເດີນທາມ. ສິ່ງເຫລົ່ານີ້ແມ່ນຕ້ອງໄດ້ເຮັດໃຫ້ສຳເລັດ, ຕົວຢ່າງ: ໂດຍຜ່ານການສົ່ງເສີມໃຫ້ຊຸມຊົນນຳໃຊ້ຊີວະນາໆພັນດ້ານກະສິກຳຢູ່ເຂດເນີນສູງຢ່າງມີຄວາມຍືນຍົງ, ເນັ້ນໜັກເປັນພິເສດໃສ່ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການພັດທະນາເສດຖະກິດແບບຍືນຍົງ.

ການສະໜັບສະໜູນຂອງພວກເຮົາ ລວມທັງ ນະໂຍບາຍຍຸດທະສາດ ແລະ ຄຳແນະນຳດ້ານວິຊາການ, ໂຄງການຂະໜາດກາງ ແລະ ຂະໜາດໃຫຍ່ ທີ່ໄດ້ຮັບການຈັດຕັ້ງປະຕິບັດໂດຍອົງການລັດຖະບານ ແລະ ເງິນຊ່ວຍເຫລືອລ້າຂະໜາດນ້ອຍ ທີ່ສະໜອງໃຫ້ແກ່ອົງການຈັດຕັ້ງຊຸມຊົນ ແລະ ສະມາຄົມທີ່ບໍ່ຫວັງຜົນກຳໄລ.



# ການສ້າງຜົນປະໂຫຍດຈາກ ‘ຄວາມອຸດົມສົມບູນຂອງຊັບພະຍາກອນ’

ເນື່ອງຈາກ ສປປ ລາວ ມີການເພິ່ງພາສູງຕໍ່ການລົງທຶນໂດຍກົງຈາກຕ່າງປະເທດ ໃນຂະແໜງການຊັບພະຍາ ກອນທາງທຳມະຊາດ, ແລະ ພາໃຫ້ມີຜົນກະທົບຕາມມາຕໍ່ການກະຈາຍລາຍໄດ້, ຄວາມທຸກຍາກ ແລະ ການພັດທະນາໂດຍລວມ, ນະໂຍບາຍຕ່າງໆ ທີ່ກຳລັງຈະອອກໃນປະຈຸບັນສ່ວນໃຫຍ່ຈະກຳນົດ ຊັບພະຍາກອນສິ່ງແວດລ້ອມທີ່ມີພາຍໃນປະເທດ ທ້າຍທີ່ສຸດແລ້ວຈະພິສູດໃຫ້ເຫັນວ່າ “ນຳໃຊ້ຄວາມອຸດົມສົມບູນຂອງຊັບ ພະຍາກອນໃຫ້ເກີດປະໂຫຍດ ຫຼື ທີ່ເອີ້ນວ່າ “resource blessing” – ຫຼື “ປະກົດການທີ່ພົບວ່າ ປະເທດທີ່ມີຊັບພະຍາກອນທຳມະຊາດອຸດົມສົມບູນ ແຕ່ກັບມີການຈະເລີນເຕີບໂຕທາງເສດຖະກິດ ແລະ ການກະຈາຍລາຍໄດ້ທີ່ເປັນທຳດ້ອຍກວ່າ ເມື່ອທຽບກັບປະເທດທີ່ບໍ່ມີຊັບພະຍາກອນອຸດົມສົມບູນ ຫຼື ທີ່ເອີ້ນວ່າ resource curse.” ປະກົດການດັ່ງກ່າວ (“curse,”) ໃນການເຕີບໂຕດ້ານເສດຖະກິດທີ່ຫລຸດໜ້ອຍຖອຍລົງ ແລະ ຜົນຮັບຈາກການພັດທະນາທີ່ບໍ່ເປັນຜົນດີ, ເຊິ່ງເປັນໄພພິບັດໃນຫລາຍໆປະເທດທີ່ກຳລັງພັດທະນາ ເຊິ່ງມີຊັບພະ ຍາກອນທຳມະຊາດຢ່າງຫຼວງຫຼາຍ, ໂດຍສະເພາະຊັບພະຍາກອນທຳມະຊາດທີ່ບໍ່ສາມາດສ້າງຂຶ້ນຄືນໃໝ່ເພື່ອທົດແທນໄດ້.

ສປປ ລາວ ແມ່ນມາເຖິງທາງແຍກ ທັງທາງດ້ານເສດຖະກິດ ແລະ ສັງຄົມ, UNDP ແມ່ນເນັ້ນໜັກໃສ່ໃຫ້ການຊ່ວຍເຫລືອ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນໃຫ້ເກີດປະໂຫຍດສູງສຸດ, ຫລຸດຜ່ອນຄວາມສ່ຽງຈາກ ການເຕີບໂຕທີ່ອີງໃສ່ຊັບພະຍາກອນທຳມະຊາດເປັນຫລັກ ແລະ ສະໜອງການຊ່ວຍເຫລືອທີ່ສຳຄັນຕ່າງໆ ຕາມແຕ່ລະຂັ້ນຕອນ ເພື່ອຊົດເຊີຍຜົນກະທົບດ້ານລົບທີ່ອາດຈະເກີດຂຶ້ນ.



**70%** ສັດສ່ວນຂອງປະຊາຊົນລາວທີ່ອາໃສຊັບພະຍາກອນທຳມະຊາດເປັນຫລັກໃນການດຳລົງຊີວິດ

**54%** ອັດຕາສ່ວນຮ້ອຍຂອງຂອງວາມຮັ່ງມີຂອງປະເທດຊາດໃນຮູບແບບຂອງຊັບພະຍາກອນທຳມະຊາດ (ນ້ຳ ແລະ ຄວາມສາມາດບົ່ມຊ້ອນຂອງເຂື່ອນໄຟຟ້ານ້ຳຕົກ, ເນື້ອທີ່ດິນ ສຳລັບກະສິກຳ, ປ່າໄມ້, ແຮ່ທາດຕ່າງໆ)

**70%/40%** ສັດສ່ວນຂອງດິນ ທີ່ມີປ່າໄມ້ປົກຄຸມ ໃນໄລຍະ 50 ປີຜ່ານມາ/ອັດຕາສ່ວນຮ້ອຍຂອງດິນທີ່ມີປ່າໄມ້ປົກຄຸມຈົນເຖິງທ້າຍປີ 2010

**10%** ສັດສ່ວນຂອງເນື້ອທີ່ດິນຂອງປະເທດ ທີ່ໄດ້ໃຫ້ສຳປະທານໃນການຂຸດຄົ້ນບໍ່ແຮ່ ທີ່ຮັບອະນຸຍາດໃນປ 2008, ມີຈຳນວນເນື້ອທີ່ທັງໝົດ ຫຼາຍກວ່າເນື້ອທີ່ດິນປຽກຊຸ່ມສຳລັບການປູກເຂົ້າ

**25%** ສັດສ່ວນຂອງສັດລ້ຽງລູກດ້ວຍນົມຢູ່ ສປປ ລາວ ທີ່ໃກ້ຈະສູນພັນ



*ປະຊາຊົນຕ້ອງມາກ່ອນ*

# ເຂື່ອນໄຟຟ້ານ້ຳຕົກຂະໜາດນ້ອຍ ຊ່ວຍໃຫ້ປະຊາຊົນບັນດາເຜົ່າມີວິຖີຊີວິດທີ່ຍືນຍົງ

ຢູ່ບ້ານຫ້ວຍຍູ້ ທີ່ຢູ່ເຂດຊົນນະບົດຫ່າງໄກສອກຫລີກ ຢູ່ເຂດພາກເໜືອຂອງ ສປປ ລາວ, ທ້າວ ກືບກູ້, ອາຍຸ 48 ປີ, ກຳລັງນັ່ງເບິ່ງຂ່າວທາງໂທລະພາບພາກຄ່ຳ ກັບໂທລະທັດສີໜ່ວຍໃໝ່ຂອງລາວ. ໃນອີກດ້ານໜຶ່ງຂອງຫ້ອງ, ລູກສາວສອງຄົນຂອງລາວ ມີໄຟຟ້າເປີດສະວ່າງເພື່ອສືບຕໍ່ຮຽນໜັງສື. ໃນໄລຍະເດືອນໜຶ່ງທີ່ຜ່ານມາ, ສິ່ງນີ້ແມ່ນບໍ່ສາມາດເປັນໄປໄດ້. ແຕ່ວ່າພາຍຫລັງຕິດຕັ້ງເຂື່ອນໄຟຟ້າພະລັງນ້ຳຂະໜາດຄວາມແຮງ 7.5 ກິໂລວັດ (kW) ເຊິ່ງສາມາດສະໜອງພະລັງງານໄຟຟ້າໃຫ້ແກ່ຊຸມຊົນເຜົ່າມົ້ງໄດ້ເຖິງ 290 ຄົນ.

ຜົນປະໂຫຍດດັ່ງກ່າວເຫລົ່ານີ້ ແມ່ນຜົນເນື່ອງມາຈາກຄວາມຄິດລິເລີ່ມຂອງຊາວບ້ານໃນການສະເໜີການກໍ່ສ້າງລະບົບເຂື່ອນໄຟຟ້າຂະໜາດນ້ອຍ ນຳອຳນາດການປົກຄອງແຂວງໄຊຍະບູລີ. ພາຍຫລັງໄດ້ຮັບທຶນຈາກ ກອງທຶນສິ່ງແວດລ້ອມໂລກ (GEF) ແຜນງານທຶນຊ່ວຍເຫລືອລ້າຂະໜາດນ້ອຍ, ຈັດຕັ້ງປະຕິບັດໂດຍ UNDP, ຊາວບ້ານໄດ້ສະໝັກໃຈເຂົ້າຮ່ວມໃນການກໍ່ສ້າງເຂດອ່າງເກັບນ້ຳຂະໜາດນ້ອຍ, ຕິດຕັ້ງທໍ່ ແລະ ລຳລຽງອຸປະກອນກໍ່ສ້າງຕ່າງໆ. ແຜນງານກອງທຶນສິ່ງແວດລ້ອມຂະໜາດນ້ອຍ ໄດ້ໃຫ້ການສະໜັບສະໜູນໂດຍກົງແກ່ການລິເລີ່ມຂອງຊຸມຊົນ ເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາຊົນນະບົດແບບຍືນຍົງ.

ປະຊາຊົນສ່ວນໃຫຍ່ຢູ່ບ້ານຫ້ວຍຍູ້ ປູກເຂົ້າ, ລ້ຽງສັດ ແລະ ເກັບເຄື່ອງປ່າຂອງດົງເປັນອາຊີບຫລັກ. ຊຸມຊົນເຂດຊົນນະບົດຫ່າງໄກສອກຫລີກ ມີໂອກາດພຽງເລັກນ້ອຍໃນການສ້າງລາຍຮັບ, ແລະ ການເຊື່ອມໂຊມຂອງປ່າ ແລະ ດິນດອນຕອນທີ່ຍາສຳລັບກະສິກຳຢ່າງຕໍ່ເນື່ອງ ມີຜົນກະທົບຕໍ່ວິຖີຊີວິດຂອງຊາວບ້ານ. ເຖິງຢ່າງໃດກໍ່ຕາມ, ການມີໄຟຟ້ານຳໃຊ້ຕະຫຼອດ 24 ຊົ່ວໂມງ, ຊາວບ້ານ ເຊັ່ນ ທ້າວ ກືບກູ້ ເປັນຕົ້ນ ກໍ່ສາມາດທ້ອນເງິນ ແລະ ປະຢັດເວລາ. ແມ່ຍິງສາມາດໃຊ້ເວລາໃນຕອນຄ່ຳ ເພື່ອຜະລິດເຄື່ອງຫັດຖະກຳມາຂາຍ. ຊາວບ້ານບໍ່ຈຳເປັນຕ້ອງຕັດຕົ້ນໄມ້ເພື່ອມາໃຊ້ຄົວກິນ ແລະ ເຂົາເຈົ້າສາມາດໃຊ້ເຕົາໄຟຟ້າແທນ. ນອກຈາກນັ້ນ, ປ່າໄມ້ເຂດຕົ້ນນ້ຳ ປະຈຸບັນແມ່ນເປັນເຂດປົກປ້ອງ,ນັບແຕ່ເຂດດັ່ງກ່າວກາຍເປັນເຂດຊັບພະຍາກອນນ້ຳສຳລັບເຂື່ອນໄຟຟ້າຂະໜາດນ້ອຍ.

ທ້າວ ກືບກູ້ ກ່າວວ່າ "ເຂື່ອນໄຟຟ້າໄດ້ປ່ຽນຊີວິດຂອງພວກເຮົາ". ປະຈຸບັນ, ລາວກຳລັງທ້ອນເງິນເພື່ອຊື້ຕູ້ເຢັນ ແລະ ພັດລົມ ຕາມທີ່ລາວຝັນໄວ້.

# ຫລຸດຜ່ອນຄວາມສ່ຽງຈາກໄພພິບັດ ແລະ ການຊ່ວຍເຫລືອເພື່ອຟື້ນຟູ

ສປປ ລາວ ເປັນປະເທດທີ່ຖືກລະເບີດຖິ້ມລົງໃສ່ຢ່າງໜັກໜ່ວງໃນໄລຍະສົງຄາມອິນດູຈີນຄັ້ງທີສອງ, ເຊິ່ງລະເບີດທີ່ຖິ້ມມີປະລິມານຫຼາຍກວ່າ 2 ລ້ານໂຕນ ຢູ່ທຸກໆແຂວງຂອງສປປລາວ ໃນໄລຍະປີ 1964 ແລະປີ 1973. ຈຳນວນປະມານ 30 ເປີເຊັນຂອງລະເບີດທີ່ຖິ້ມລົງມາແມ່ນຍັງບໍ່ທັນແຕກ ແລະ ອາດຈະລະເບີດໄດ້ທຸກເມື່ອ ແລະ ມີຄວາມອັນຕະລາຍທີ່ຝັງຢູ່ໃຕ້ພື້ນດິນ (UXO). ການມີ UXO ເຮັດໃຫ້ມີຜົນກະທົບດ້ານລົບຕໍ່ການພັດທະນາປະເທດຊາດ ແລະການຫລຸດຜ່ອນຄວາມທຸກຍາກ ເຊິ່ງເປັນອຸປະສັກຕໍ່ການດຳລົງຊີວິດຂອງປະຊາຊົນເຂດຊົນນະບົດ, ເຊິ່ງເປັນບ່ອນທີ່ປະຊາກອນສ່ວນໃຫຍ່ອາໃສຢູ່, ອັນນີ້ເຮັດໃຫ້ມີການບຸກເບີກດິນມີຄວາມຊັກຊ້າ ແລະ ເຮັດໃຫ້ມູນຄ່າການລົງທຶນແມ່ນສູງຂຶ້ນ. ການຮັບຮູ້ເຖິງຜົນກະທົບໄລຍະຍາວຂອງ UXO ຕໍ່ຄວາມເປັນໄປໄດ້ໃນການພັດທະນາຊຸມຊົນທີ່ໄດ້ຮັບຜົນກະທົບ, ລັດຖະບານຈຶ່ງໄດ້ໃຫ້ຄຳໝັ້ນສັນຍາວ່າຈະບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາອັນໃໝ່ ເຊິ່ງເປັນເປົ້າໝາຍທີ 9 ເພື່ອຫລຸດຜ່ອນຜົນກະທົບຈາກ UXO ໃຫ້ໄດ້ພາຍໃນປີ 2020.

UNDP ໃຫ້ການຊ່ວຍເຫລືອປະຊາຊົນລາວ ເພື່ອຫລຸດພົ້ນຈາກຄວາມຢ້ານກົວຈາກການບາດເຈັບ ແລະ ເສຍຊີວິດຈາກລະເບີດທີ່ຍັງບໍ່ແຕກ ແລະສິ່ງທີ່ເສດເຫລືອຈາກສົງຄາມ. ພວກເຮົາຍັງຊ່ວຍປະຊາຊົນໃຫ້ປົກປ້ອງຊີວິດ ແລະ ຊັບສິນຂອງເຂົາເຈົ້າໃຫ້ດີກວ່າເກົ່າ ຈາກໄພພິບັດທາງທຳມະຊາດ. ໂດຍຜ່ານ ແຜນງານຂອງລັດຖະບານ ກ່ຽວກັບລະເບີດທີ່ຍັງບໍ່ແຕກ (UXO Lao), UNDP ແລະ ຄູ່ຮ່ວມງານຕ່າງໆ ໄດ້ຊ່ວຍໃນການບຸກເບີກທີ່ດິນດ້ວຍເຕັກນິກທີ່ໄດ້ຮັບການປັບປຸງ, ການຝຶກອົບຮົມນັກວິຊາການເກັບກູ້ລະເບີດ ແລະ ສະໜອງການສຶກສາດ້ານຄວາມສ່ຽງຂອງລະເລີດທີ່ຍັງບໍ່ແຕກໂດຍອີງໃສ່ຊຸມຊົນເປັນຫລັກ ແລະ ການສຳຫລວດ, ໂດຍສະເພາະໃນບັນດາແຂວງທີ່ໄດ້ຮັບຜົນກະທົບຈາກລະເບີດທີ່ຍັງບໍ່ແຕກ. ການສະໜັບສະໜູນຂອງພວກເຮົາຕໍ່ກອງປະຊຸມລັດພາຄີອະນຸສັນຍາວ່າດ້ວຍລະເບີດລູກຫວ່ານ ຄັ້ງທີ 1 (First Meeting of States Parties to the Convention on Cluster Munitions), ທີ່ຈັດຂຶ້ນທີ່ນະຄອນຫຼວງວຽງຈັນໃນເດືອນພະຈິກ ປີ 2010, ເຊິ່ງໄດ້ນຳເອົາບັນດາປະເທດທີ່ເຂົ້າຮ່ວມກົດໝາຍດ້ານມະນຸດສະທຳທີ່ເປັນມາດຕະຖານສາກົນອັນໃໝ່,ບັນດາອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ, ປະຊາສັງຄົມ, ແລະ ຜູ້ລອດຊີວິດຈາກລະເບີດທີ່ຍັງບໍ່ແຕກ ມາຮ່ວມກັນ.

ດ້ານການຄຸ້ມຄອງຄວາມສ່ຽງຈາກໄພພິບັດ, UNDP ດຳເນີນການເພື່ອພັດທະນາຂີດຄວາມສາມາດຂອງທ້ອງຖິ່ນ ແລະ ສູນກາງ ເພື່ອໃຫ້ສາມາດກະກຽມ ແລະ ຕອບໂຕ້ ຕໍ່ໄພພິບັດທາງທຳມະຊາດທີ່ເກີດຂຶ້ນເລື້ອຍໆ ໄດ້ດີຍິ່ງຂຶ້ນ ເຊັ່ນ: ນ້ຳຖ້ວມ, ໄພແຫ້ງແລ້ງ, ພະຍຸລະດູຮ້ອນ ແລະ ດິນເຊາະເຈື່ອນ. ຄວາມອັນຕະລາຍຈາກໄພທຳມະຊາດເຫລົ່ານີ້ພາໃຫ້ມີການສູນເສຍຊີວິດ ແລະ ເສຍຫາຍຕໍ່ເສດຖະກິດໃນຊຸມຊົນທີ່ທຸກຍາກເຂດຊົນນະບົດ ເຊິ່ງເພິ່ງພາອາໃສກະສິກຳເພື່ອດຳລົງຊີວິດ. ວຽກງານການຄຸ້ມຄອງໄພພິບັດ, ຕາມລຳດັບ, ແມ່ນສິ່ງເສີມປະສິດທິຜົນຂອງການປົກຄອງ ແລະ ການພັດທະນາ ເຊິ່ງບໍ່ມີຜົນເສຍໃດໆຕໍ່ສິ່ງແວດລ້ອມ.



# ປັບປຸງ ແລະ ປະສານການກະກຽມຄວາມພ້ອມເພື່ອຕອບໂຕ້ກັບໄພພິບັດທາງທຳມະຊາດ

ນ້ຳຖ້ວມຮຸນແຮງ ແລະ ການເພີ່ມຂຶ້ນຂອງເຫດການໄພພິບັດທາງທຳມະຊາດທີ່ຮຸນແຮງ ໄດ້ເນັ້ນໃຫ້ເຫັນເຖິງຄວາມຈຳເປັນໃນການເສີມສ້າງການຄຸ້ມຄອງໄພພິບັດໃຫ້ເຂັ້ມແຂງຍິ່ງຂຶ້ນ ຢູ່ ສປປ ລາວ. ໄດ້ມີຄວາມພະຍາຍາມທີ່ຈະບັນລຸແຜນການຄຸ້ມຄອງໄພພິບັດແຫ່ງຊາດສະບັບທຳອິດ, ສຳລັບປີ 2012 ເຖິງ 2015, ເຊິ່ງໄດ້ຮັບການພັດທະນາຂຶ້ນໂດຍຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ (NDMO) ໂດຍໄດ້ຮັບການສະໜັບສະໜູນດ້ານງົບປະມານ ແລະ ວິຊາການຈາກ UNDP.

ທ່ານວິໄລພົງສີສົມຫວັງ,ຮອງອຳນວຍການຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ (NDMO) ກ່າວວ່າ "ພວກເຮົາຈຳເປັນຕ້ອງໄດ້ສ້າງNDMO ໃນນາມສະຖານບັນ ແລະ ແຜນຕ້ານໄພພິບັດຈະຊ່ວຍການສ້າງແຜນການກະກຽມຄວາມພ້ອມຕ້ານກັບໄພພິບັດທາງທຳມະຊາດ ທີ່ເປັນວິທີການທີ່ເກາະກ່າຍຫຼາຍຂະແໜງການ ເຊິ່ງລວມທັງທຸກໆກະຊວງ"

NDMO ທີ່ໄດ້ຮັບການສ້າງຄວາມເຂັ້ມແຂງ ຈະສາມາດແນະນຳ ແລະ ແຊກແຊງຂະແໜງການຕ່າງໆ ເພື່ອໃຫ້ມີ ການກະກຽມທີ່ດີກວ່າ; ເຊັ່ນຕົວຢ່າງ: ອາດຈະສາມາດປັບປຸງວຽກງານຂອງຕົນ ໂດຍຮ່ວມກັບ ກົມອຸຕຸນິຍົມ ແລະ ອຸທົກກະສາດ, ຊຶ່ງສຶກສາສະພາບດິນຟ້າອາກາດ ແຕ່ວ່າບໍ່ມີອຳນາດໜ້າທີ່ໃນການສົ່ງຕໍ່ຂໍ້ມູນດັ່ງກ່າວໃຫ້ຊຸມຊົນ.

ສປປ ລາວ ແມ່ນໄດ້ລົງນາມໃນ ຂອບວຽກການປະຕິບັດງານຮີວໂກ (Hyogo Framework for Action) ເຊິ່ງເປັນການສ້າງຄວາມສາມາດໃນການຟື້ນຟູຊາດ ແລະ ຊຸມຊົນຕ່າງໆຈາກໄພພິບັດ, ເປັນແຜນງານໄລຍະ 10 ປີ ນັບແຕ່ 2005 ເຖິງ 2015 ແນໃສ່ເຮັດໃຫ້ໂລກມີຄວາມປອດໄພຍິ່ງຂຶ້ນຈາກໄພພິບັດທາງທຳມະຊາດ.






**25%**

ສັດສ່ວນຂອງບ້ານ ຢູ່ ສປປ ລາວ ທີ່ຍັງມີລະເບີດທີ່ບໍ່ທັນແຕກ (UXO) ຢູ່ພື້ນດິນ

**20,000**

ຈຳນວນຂອງປະຊາຊົນທີ່ເສຍຊີວິດ ແລະ ຖືກບາດເຈັບ ເນື່ອງຈາກການລະເບີດຂອງ UXO ນັບແຕ່ສົງຄາມອິນດູຈີນຄັ້ງທີສອງ ສິ້ນສຸດລົງ

**1.3 ລ້ານ**

ຈຳນວນຂອງ UXO ທີ່ຖືກທຳລາຍ

**30,000**

ຈຳນວນເຮັກຕາຂອງເນື້ອທີ່ດິນທີ່ ປອດໄພຈາກ UXO, ທຽບເທົ່າກັບ 300 ກິໂລຕາແມັດ

**5 ອາທິດ/1.5 ປີ**

ໄລຍະເວລາລະຫວ່າງເຫດການນ້ຳຖ້ວມຮຸນແຮງສອງຄັ້ງ ທີ່ເກີດຂຶ້ນຢູ່ ສປປ ລາວ ໃນເດືອນມິຖຸນາ-ກໍລະກົດ 2011, ສ້າງຜົນເສຍຫາຍເຖິງ 100 ລ້ານໂດລາ/ ໄລຍະເວລາສະເລ່ຍລະຫວ່າງເຫດການນ້ຳຖ້ວມຮຸນແຮງຕ່າງໆ (1966-2001)



*ປະຊາຊົນຕ້ອງມາກ່ອນ*

# ການຕິດຕາມນໍລະດົກ ທີ່ເປັນອັນຕະລາຍເຖິງຊີວິດ ຊຶ່ງຕົກທອດຈາກສົງຄາມ

ລະດູການກະກຽມເຮັດນາ ເປັນເວລາທີ່ສະເທືອນຂວັນສຳລັບຊາວນາ ອາຍຸ 49 ປີ, ທ້າວ ວົງພອນ, ຢູ່ແຂວງຊຽງຂວາງ. ລາວຖືກເສຍອົງຄະເມື່ອປະສົບອຸບັດເຫດຈາກລະເບີດແຕກໃນປີ 2006. ວົງພອນ, ໄດ້ສູນເສຍມືເບື້ອງຊ້າຍ, ລາວເປັນໜຶ່ງໃນຫລາຍຮ້ອຍຄົນທີ່ສູນເສຍອະໄວຍະວະ ຫຼື ເສຍຊີວິດໃນແຕ່ລະປີ ຈາກການລະເບີດຂອງອາວຸດສົງຄາມ ທີ່ໄດ້ຖືກຖິ້ມລົງໃສ່ປະເທດລາວ ໂດຍເຮືອບິນສູ້ຮົບຂອງອາເມລິກາ ໃນລະຫວ່າງປີ 1964 ແລະ 1973.

"ຂ້ອຍຍັງມີຄວາມຢ້ານກົວຢູ່," ວົງພອນ ກ່າວ. "ມັນຍາກຫລາຍສຳລັບພວກເຮົາ, ເພາະວ່າເມື່ອພວກເຮົາປູກຝັງຢູ່ດິນທີ່ຍັງມີລະເບີດທີ່ຍັງບໍ່ທັນແຕກ. ແຕ່ວ່າພວກເຮົາຕ້ອງໄດ້ປູກຝັງ - ຖ້າບໍ່ດັ່ງນັ້ນພວກເຮົາກໍ່ບໍ່ມີລາຍໄດ້."

ສປປ ລາວ ຍັງຄົງເປັນປະເທດທີ່ຖືກກະທົບຫລາຍທີ່ສຸດທາງດ້ານ UXO, ເປັນບ່ອນທີ່ເສດເຫລືອຂອງສົງຄາມຍັງປະໄວ້. ເນື້ອທີ່ດິນປູກຝັງຈຳນວນຫຼາຍກວ່າ 200,000 ເຮັກຕາ ຂອງດິນກະສິກຳທົ່ວປະເທດ ໂດຍສະເພາະໃນເຂດທີ່ທຸກຍາກ ຍັງຈຳເປັນຕ້ອງໄດ້ມີການບຸກເບີກ.

ແຜນການສິບປີຂອງລັດຖະບານ ແມ່ນເລັ່ງໃສ່ການບຸກເບີກດິນໃນ 42 ເມືອງທຸກຍາກທີ່ສຸດທີ່ມີຄວາມສ່ຽງ, ເຊິ່ງໄດ້ຮັບການສະໜັບສະໜູນຈາກ UNDP ແລະ ຄູ່ຮ່ວມພັດທະນາຕ່າງໆ, ອັນນີ້ເປັນສ່ວນໜຶ່ງຂອງຂໍ້ຜູກພັນຂອງ ສປປ ລາວ ພາຍໃຕ້ ອານຸສັນຍາກ່ຽວກັບລະເບີລູກຫວ່ານ ປີ 2008 (2008 Convention on Cluster Munitions). ກອງປະຊຸມລັດພາຄີອະນຸສັນຍາວ່າດ້ວຍລະເບີດລູກຫວ່ານຄັ້ງທີ 1 ໃນປີ 2010 ໄດ້ສະໜອງການສະໜັບສະໜູນເພີ່ມເຕີມຕໍ່ທຸກໆປະເທດທີ່ກຳລັງແກ້ໄຂບັນຫາ UXO, ແລະ ລັດຖະບານ ຄາດຫວັງວ່າ ແຜນການດັ່ງກ່າວ ຈະຊ່ວຍໃຫ້ໄດ້ຮັບທຶນຊ່ວຍເຫລືອເພີ່ມເຕີມສຳລັບຄວາມພະຍາຍາມແຫ່ງຊາດໃນການກຳຈັດລະເບີດທີ່ຍັງບໍ່ທັນແຕກດັ່ງກ່າວ.

# UNDP ເປັນເຄືອຂ່າຍພັດທະນາສາກົນຂອງສະຫະປະຊາຊາດ

UNDP ມີຫ້ອງການຕາງໜ້າຢູ່ 177 ປະເທດ ແລະ ຂອບເຂດອະທິປະໄຕ ເຮັດໃຫ້ UNDP ຢູ່ໃນຕຳແໜ່ງທີ່ມີສຳລັບວຽກງານ ເຜີຍແຜ່ໂຄສະນາເພື່ອການຫັນປ່ຽນຕ່າງໆ, ເຊື່ອມໂຍງບັນດາປະເທດທີ່ມີຄວາມຮູ້ ແລະ ຊັບພະຍາກອນຕ່າງໆ, ແລະ ປະສານຄວາມພະຍາຍາມຢ່າງກວ້າງຂວາງໃນລະດັບປະເທດ.

ຢູ່ ສປປ ລາວ ຫ້ອງການຕາງໜ້າ UNDP ຍັງເຮັດໜ້າທີ່ເປັນ ຜູ້ປະສານງານຂອງຫ້ອງການຕາງໜ້າ ຂອງກິດຈະກຳການພັດທະນາຕ່າງໆສຳລັບທຸກໆອົງການຂອງສະຫະປະຊາຊາດ. ຢູ່ ສປປ ລາວ ມີອົງການຈັດຕັ້ງຂອງສະຫະປະຊາດ ຈຳນວນ 23 ອົງການ. ພວກເຮົາເຮັດວຽກຮ່ວມກັນເປັນດັ່ງທີມງານສະຫະປະຊາຊາດຂອງປະເທດ (UNCT) ເພື່ອສະໜັບສະໜູນການພັດທະນາແຫ່ງຊາດ ແລະ ການດຳລົງຊີວິດທີ່ດີກວ່າເພື່ອທຸກຄົນ, ໂດຍສະເພາະແມ່ນຄົນທຸກຍາກທີ່ສຸດ ແລະ ດ້ອຍໂອກາດທີ່ສຸດ.

# ເຄື່ອງມືໃນການ ປະສານງານ ໃນລະດັບສູງ

ໃນຂະນະທີ່ແຕ່ລະອົງການຈັດຕັ້ງຂອງ ສະຫະປະຊາຊາດ ມີແຜນງານ ແລະ ໂຄງການຕ່າງໆ ທີ່ສອດຄ່ອງກັບສິດອຳນາດຂອງຕົນ, UNCT ແມ່ນຮັບປະກັນວ່າ ແຜນງານເຫລົ່ານີ້ ໄດ້ຮັບການເສີມສ້າງ ຊຶ່ງກັນ ແລະ ກັນ ແລະ ສະໜອງການຊ່ວຍ ເຫລືອເພື່ອພັດທະນາທີ່ມີປະສິດທິຜົນ ທີ່ສຸດ ດ້ວຍຮູບແບບ ທີ່ມີການ ປະສານສົມ ທົບເປັນຢ່າງດີ. ສິ່ງນີ້ສາມາດບັນລຸໄດ້ ໂດຍຜ່ານຜົນໄດ້ຮັບທີ່ຄາດຫວັງຂອງ ແຜນງານການຊ່ວຍເຫລືອເພື່ອການ ພັດທະນາຂອງປະຊາຊາດ (UNDAF) 2012 - 2015, ເຊິ່ງກຳນົດ 6 ຂົງເຂດ ບູລິມະສິດ ແລະ 10 ເປົ້າໝາຍບູລິມະສິດ ຂອງວົງຈອນ UNDAF. UNDAF ແມ່ນອີງໃສ່ການ ວິເຄາະຢ່າງຮອບດ້ານ ເຖິງສາຍເຫດຕົ້ນຕໍຂອງສິ່ງທ້າທາຍ ໃນການພັດທະນາປະເທດ ແລະ ຄວາມ ຈຳເປັນທີ່ກ່ຽວຂ້ອງ ທີ່ ຕ້ອງໄດ້ ຮັບການ ແກ້ໄຂໃນທຸກລະດັບ.



# ຄູ່ຮ່ວມງານ ຂອງພວກເຮົາ

ພວກເຮົາເຮັດວຽກກັບຄູ່ຮ່ວມງານຫລາກຫລາຍທັງລະດັບປະເທດ ແລະ ສາກົນ, ລວມທັງບັນດາກະຊວງ ແລະ ອຳນາດການປົກຄອງຂັ້ນສູນກາງ, ແຂວງ ແລະ ທ້ອງຖິ່ນ; ສະຖາບັນການເງິນ ແລະ ຜູ້ໃຫ້ທຶນຕ່າງໆ; ອົງການຈັດ ຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ; ແລະ ບັນດາອົງການຕ່າງໆຂອງສະຫະປະຊາຊາດ.

# ແຫຼ່ງຂໍ້ມູນ

ຕົວເລກ/ຈຳນວນ ແມ່ນມາຈາກ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 7 ປີ 2011-2015; ບົດລາຍງານການວິເຄາະປະເທດຂອງ ອົງການສະຫະປະຊາຊາດ ປີ 2010; ບົດລາຍງານຄວາມຄືບໜ້າການປະຕິບັດ ເປົ້າໝາຍສະຫັດສະວັດ ດ້ານການພັດທະນາ ຂອງ ສປປ ລາວ ປີ 2009; ບົດລາຍງານການພັດທະນາ ສປປ ລາວ ປີ 2010, ທະນາຄານໂລກ; ສຳນັກງານນາຍົກລັດຖະມົນຕີ ແລະ ທະບວງປົກຄອງ ແລະ ຄຸ້ມຄອງ ລັດຖະກອນ, ທຶນພັດທະນາເມືອງ: ເສີມສ້າງການບໍລິຫານຂອງເມືອງ ເພື່ອການພັດທະນາທີ່ເນັ້ນໜັກ ໃສ່ຄົນທຸກຍາກ (ສະບັບປັບປຸງເດືອນມີນາ 2011); ແຜນການລົງທຶນດ້ານປ່າໄມ້ ຂອງ ສປປ ລາວ; IRIN News Service.





# ຕິດຕໍ່ພວກເຮົາໄດ້ທີ່

ອົງການສະຫະປະຊາຊາດ ເພື່ອການພັດທະນາ
ຖະໜົນລ້ານຊ້າງ
ຕູ້ ປ.ນ. 345
ນະຄອນຫຼວງວຽງຈັນ, ສປປ ລາວ

ອີເມລ: info.la@undp.org

ໂທລະສັບ: +856(0) 21 267 777

ແຟັກ: +856(0) 21 267 799
+856(0) 21 264 939



## ຄຳບັນຍາຍຮູບພາບ ແລະ ຖ່າຍພາບໂດຍ

**ໜ້າປົກ** ນວນອານົງ, ຜູ້ປະກາດຂ່າວອາສາສະໝັກ ຂອງສະຖານີວິທະຍຸຊຸມຊົນ ທ່າແຕງ, ແຂວງເຊກອງ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Philippe Pernet

**ໜ້າ. 2/3** ຢູ່ ສປປ ລາວ ມີ 49 ຊົນເຜົ່າທີ່ໄດ້ຮັບຮອງເປັນທາງການ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Harish Murthi

**ໜ້າ. 4/5** ຊາວບ້ານກຳລັງເບິ່ງຂໍ້ມູນຢູ່ກະດານຂ່າວ ຢູ່ບ້ານຄຳກອກ, ແຂວງເຊກອງ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Philippe Pernet

**ໜ້າ. 6/7** ຊາວບ້ານກຳລັງໄປຕະຫລາດ ໂດຍນຳໃຊ້ເສັ້ນທາງໃໝ່ ຢູ່ບ້ານ ທໍກົງ, ແຂວງສາລະວັນ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Philippe Pernet

**ໜ້າ. 11** ການຜະລິດ, ລວມທັງຜະລິດຕະພັນຕັດຫຍິບ, ກວມເອົາພຽງແຕ່ 3.9% ຂອງກຳລັງແຮງງານ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ

**ໜ້າ. 13** ການກະກຽມໄຮ່ນາເພື່ອປູກເຂົ້າ, 80% ຂອງປະຊາກອນແມ່ນມີອາຊີບກະສິກຳແບບກຸ້ມຕົນເອງ

ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ

**ໜ້າ. 14/15** ລັດຖະບານ ແລະ ຄູ່ຮ່ວມພັດທະນາ ກຳລັງປຶກສາຫາລື
ທີ່ ກອງປະຊຸມໂຕະມົນເພື່ອຈັດຕັ້ງປະຕິບັດ ປີ 2011
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/ຮູບພາບລາວ

**ໜ້າ. 16/17** Minh Pham, ຜູ້ປະສານງານ ແລະ ຜູ້ປະຈຳການ ອົງການສະຫະປະຊາຊາດ
ເພື່ອການພັດທະນາ ປະຈຳ ສປປ ລາວ, ກຳລັງເປີດກອງປະຊຸມໂຕະມົນ ເພື່ອຈັດຕັ້ງປະຕິບັດ ປີ 2011
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/ຮູບພາບລາວ

**ໜ້າ. 18/19** ການບໍລິການດ້ວຍຮອຍຍິ້ມ ທີ່ ສູນກາງບໍລິການແບບປະຕູດຽວ ທີ່ຕົວເມືອງເຊກອງ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Philippe Pernet

**ໜ້າ. 20/21** ສປປ ລາວ ແມ່ນມີອັດຕາການຊົມໃຊ້ນ້ຳຕໍ່ຫົວຄົນສູງທີ່ສຸດໃນເຂດອາຊີ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ

**ໜ້າ. 22/23** ເນື້ອທີ່ດິນໜ້ອຍວ່າ 5% ຂອງເນື້ອທີ່ດິນໃນປະເທດ ແມ່ນນຳໃຊ້ສຳລັບການຜະລິດກະສິກຳ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Philippe Pernet

**ໜ້າ. 24/25** ທັງໝົດ 17 ແຂວງ ຂອງ ສປປ ລາວ ແມ່ນປະເຊີນກັບບັນຫາລະເບີດທີ່ຍັງບໍ່ແຕກ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Paul Wager

**ໜ້າ. 26/27** ການຈຳກັດ UXO ຢູ່ເຂດພາກໃຕ້ຂອງປະເທດ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Paul Wager

**ໜ້າ. 29** Rowers ກຳລັງກະກຽມແຂ່ງເຮືອຊ່ວງ ເພື່ອເຂົ້າຮ່ວມປະເພນີແຂ່ງຂັນເຮືອຊ່ວງ ປີ 2011 ຢູ່ວຽງຈັນ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/Toby Fricker

**ໜ້າ. 30/31** ຜູ້ບໍລິຫານອົງການສະຫະປະຊາຊາດເພື່ອການພັດທະນາ, Helen Clark,
ແລະ ຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ດຣ.
ທອງລຸນ ສີສຸລິດ, ໃນລະຫວ່າງການພັກຜ່ອນ ຂອງກອງປະຊຸມໂຕະມົນປີ 2010

ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ/ຮູບພາບລາວ

## ອອກແບບ ແລະ ຈັດວາງ

www.oudone.com (Jean-Baptiste Audenis)

*Empowered lives.*
*Resilient nations.*

**ອົງການສະຫະປະຊາຊາດ ເພື່ອການພັດທະນາ**
**ຢູ່ ສປປ ລາວ** - 2012-2015

ອົງການສະຫະປະຊາຊາດ ເພື່ອການພັດທະນາ
ຖະໜົນລ້ານຊ້າງ
ຕູ້ ປ.ນ. 345
ນະຄອນຫຼວງວຽງຈັນ, ສປປ ລາວ